ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ຍຸດທະສາດ
# ແລະ ແຜນປະຕິບັດງານ ແຫ່ງຊາດ
# ວ່າດ້ວຍ ການສຶກສາຮຽນຮ່ວມ
# 2011-2015

ກະຊວງສຶກສາທິການ ແລະ ກິລາ

2011

# ສາລະບານ

I. ພາກສະເໜີ 2

II. ສະພາບການສຶກສາໃນ ສປປ ລາວ 3

III. ສາເຫດທີ່ພາໃຫ້ກຸ່ມດ້ອຍໂອກາດບໍ່ສາມາດເຂົ້າເຖິງການສຶກສາ 4

IV. ຄາດໝາຍສູ້ຊົນ 5

V. ຫຼັກການຍຸດທະສາດ 6

VI. ຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດ ວ່າດ້ວຍການສຶກສາຮຽນຮ່ວມ(2011-2015) 8

VII. ສັງລວມຄວາມຕ້ອງການທາງດ້ານງົບປະມານ ແລະ ແຫລ່ງທຶນ 25

ເອກະສານຊ້ອນທ້າຍ 1: ບັນດາແຜນງານ ແລະ ໂຄງການບູລິມະສິດຂອງແຜນພັດທະນາ ຂະແໜງການສຶກສາ 2011-2015 27

ເອກະສານຊ້ອນທ້າຍ 2: ນິຍາມຄຳສັບທີ່ໃຊ້ໃນ ນະໂຍບາຍ, ຍຸດທະສາດ ແລະ ແຜນປະຕິບັດງານ ແຫ່ງຊາດ ວ່າດ້ວຍການສຶກສາຮຽນຮ່ວມ 28

# ຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມ 2011-2015

## I. ພາກສະເໜີ

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກດຳລັດ ເລກທີ 509/ນຍ ລົງວັນທີ 07 ທັນວາ 2010 ເພື່ອຮັບຮອງ ແລະ ປະກາດໃຊ້ ນະໂຍບາຍແຫ່ງຊາດວ່າດ້ວຍການສຶກສາ ຮຽນຮ່ວມເລກທີ 1170/ສສ, ເຊິ່ງເປັນການຜັນຂະຫຍາຍ ແຜນປະຕິບັດງານແຫ່ງຊາດການສຶກສາເພື່ອທຸກຄົນ 2003-2015, ແຜນຍຸດທະສາດການປະຕິຮູບລະບົບການສຶກສາ 2006-2015, ຂອບພັດທະນາ ຂະແໜງການສຶກສາ 2009-2015, ກໍ່ຄື ແຜນພັດທະນາ ຂະແໜງການສຶກສາ 2011-2015 ເພື່ອເປັນທິດທາງໃນການສະໜອງການສຶກສາທີ່ມີຄຸນນະພາບຢ່າງສະເໝີພາບເທົ່າທຽມກັນ, ຫຼຸດຜ່ອນ ແລະ ລຶບລ້າງຄວາມຫຼຸດໂຕນ ໃນການເຂົ້າເຖິງການສຶກສາຂອງກຸ່ມທີ່ດ້ອຍໂອກາດ, ໂດຍສະເພາະເພດຍິງ, ຊົນເຜົ່າ, ຄົນພິການ ແລະ ຜູ້ທີ່ມີຄວາມຫຍຸ້ງຍາກ ທາງດ້ານເສດຖະກິດ-ສັງຄົມ.

ເພື່ອເຮັດໃຫ້ນະໂຍບາຍດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ຈຶ່ງມີຄວາມຈຳເປັນຕ້ອງພັດທະນາຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມ ທີ່ແນໃສ່ ແກ້ໄຂບັນດາອຸປະສັກ ທີ່ກີດກັ້ນການເຂົ້າເຖິງການສຶກສາ ໂດຍສ້າງສະພາບແວດລ້ອມທີ່ເປັນມິດ, ປາສະຈາກການຈຳແນກ, ປອດໄພ ແລະ ປົກປ້ອງສຳລັບຜູ້ຮຽນທຸກຄົນ; ສົ່ງເສີມໃຫ້ຜູ້ຮຽນ, ຄອບຄົວ ແລະ ຊຸມຊົນມີສ່ວນຮ່ວມໃນການຮຽນຮູ້; ພ້ອມກັນນັ້ນ ກໍ່ຊຸກຍູ້ໃຫ້ລະບົບການຈັດການສຶກສາມີການປັບປຸງຢ່າງຕໍ່ເນື່ອງ ເພື່ອໃຫ້ແທດເໝາະຕາມຄວາມຕ້ອງການຂອງຜູ້ຮຽນແຕ່ລະຄົນ ແທນທີ່ຈະໃຫ້ ຜູ້ຮຽນປັບປຸງໄປຕາມຄວາມຕ້ອງການຂອງໂຮງຮຽນ ແລະ ຮັບປະກັນໃຫ້ຜູ້ຮຽນທຸກຄົນໄດ້ຮັບການບັນຈຸເຂົ້າໃນຫ້ອງຮຽນ ແລະ ໄດ້ຮຽນຮູ້ຢ່າງມີຄຸນນະພາບ.

# II. ສະພາບການສຶກສາໃນ ສປປ ລາວ

ອີງຕາມບົດສະຫຼຸບແຜນປະຕິບັດການສຶກສາ ປະຈຳສົກຮຽນ 2009-2010 ເຫັນວ່າການພັດທະນາການສຶກສາ ມີຄວາມຄືບໜ້າຫຼາຍສົມຄວນ. ຈຳນວນເດັກທີ່ເຂົ້າໂຮງຮຽນອະນຸບານ, ລ້ຽງເດັກ ແລະ ນັກຮຽນກຸ່ມປະຖົມ ມີເຖິງ 95,974 ຄົນ (ຍິງ 47,835 ຄົນ, ຊາຍ 48,139 ຄົນ), ມີໂຮງຮຽນປະຖົມ 8,968 ແຫ່ງ ໃນນັ້ນໂຮງຮຽນປະຖົມສົມບູນ 5,129 ແຫ່ງ, ອັດຕາເຂົ້າຮຽນສຸດທິໃນຊັ້ນປະຖົມສຶກສາ 92.7% (ຍິງ 91.7%, ຊາຍ 93.7%), ອັດຕາການເຂົ້າໂຮງຮຽນລວມໃນຊັ້ນມັດທະຍົມສຶກສາຕອນຕົ້ນ 60.2% (ຍິງ 55.5%, ຊາຍ 64.6%), ງົບປະມານ ດ້ານການສຶກສາຄິດໄລ່ເປັນເປີເຊັນທຽບໃສ່ລາຍຈ່າຍທັງໝົດຂອງລັດຖະບານ 15.44%, ຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນການເຂົ້າເຖິງການສຶກສາ ມີການປັບປຸງດີຂຶ້ນ. ດັດສະນີຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນການເຂົ້າຮຽນຊັ້ນປະຖົມ ສຳລັບເດັກອາຍຸ 6-10 ປີ ແມ່ນ 0.98. ຄຽງຄູ່ກັນນັ້ນພາກເອກະຊົນກໍໄດ້ມີສ່ວນຮ່ວມໃນການຂະຫຍາຍການສຶກສານັບມື້ນັບຫຼາຍຂຶ້ນ, ໂດຍສາມາດ ກວມເອົາ 3.5% ຂອງນັກຮຽນທັງໝົດ.

ຄຽງຄູ່ກັບຜົນສຳເລັດທີ່ກ່າວມານັ້ນ, ຍັງມີສິ່ງຄົງຄ້າງຈຳນວນໜຶ່ງທີ່ຈະຕ້ອງໄດ້ຮັບການປັບປຸງແກ້ໄຂ, ໂດຍສະເພາະແມ່ນຄວາມຫຼຸດໂຕນກັນຂອງອັດຕາການເຂົ້າຮຽນ, ການຄ້າງຫ້ອງ, ການປະລະ ການຮຽນ ແລະ ການຮຽນຈົບຊັ້ນ ລະຫວ່າງເພດຍິງ-ເພດຊາຍ, ລະຫວ່າງຊົນເຜົ່າ ແລະ ລະຫວ່າງບັນດາເມືອງທີ່ບໍ່ທຸກ ແລະ ບັນດາເມືອງທຸກ. ລະດັບການສຶກສາຍິ່ງສູງຂຶ້ນເທົ່າໃດ ການຫຼຸດໂຕນ ດັ່ງກ່າວກໍຍິ່ງມີຫຼາຍຂຶ້ນເທົ່ານັ້ນ. ໃນສົກຮຽນ 2009-2010, ອັດຕາການເຂົ້າຮຽນສຸດທິຊັ້ນປະຖົມໃນບັນດາເມືອງບໍ່ທຸກແມ່ນ 95.1% ສ່ວນໃນບັນດາເມືອງທຸກທີ່ສຸດມີພຽງ 88.1%; ອັດຕາ ປະລະໃນບັນດາເມືອງບໍ່ທຸກແມ່ນ 6.3% ແລະ ໃນບັນດາເມືອງທຸກ ທີ່ສຸດແມ່ນ 7.6%; ອັດຕາການ ຄ້າງຫ້ອງໃນບັນດາເມືອງບໍ່ທຸກ 11.9% ແລະ ໃນບັນດາເມືອງ ທຸກທີ່ສຸດແມ່ນ 17.2%; ອັດຕາການລອດເຫຼືອຮອດຫ້ອງ ປ.5 ເມືອງບໍ່ທຸກແມ່ນ 73.1% ແລະ ໃນບັນດາເມືອງທຸກທີ່ສຸດແມ່ນ 68.3%; ດັດສະນີຄວາມສະເໝີພາບ ຍິງ-ຊາຍ ໃນຊັ້ນມັດທະຍົມຕົ້ນເທົ່າກັບ 0.86, ໃນຊັ້ນມັດທະຍົມປາຍ 0.82. ຈຳນວນນັກຮຽນ-ນັກສຶກສາ ສາຍວິຊາຊີບ ແລະ ເຕັກນິກມີ 14,009 ຄົນ (ຍິງ 4,809 ຄົນ, ຊາຍ 9,200 ຄົນ); ການສຶກສາຊັ້ນສູງ 101,954 ຄົນ (ຍິງ 41,883 ຄົນ,  60,071 ຄົນ). ໃນສົກຮຽນ 2007-2008 ມີເດັກພິການພຽງ 4,569 ຄົນ ຫຼື ປະມານ 4% ຂອງເດັກພິການໃນເກນອາຍຸເຂົ້າຮຽນທັງໝົດ[1] ໄດ້ເຂົ້າຮຽນ ໃນຊັ້ນ ອະນຸບານ, ປະຖົມ ແລະ ມັດທະຍົມສຶກສາ ແລະ ໄດ້ຮັບການຊ່ວຍເຫຼືອທີ່ເໝາະສົມຈາກຄູສອນທີ່ໄດ້ຜ່ານການອົບຮົມ.

---

[1] ອີງຕາມຕົວເລກການສຳຫຼວດໃນທົ່ວໂລກໄດ້ຄາດຄະເນວ່າ ຈຳນວນຄົນພິການເທົ່າກັບ 10% ຂອງພົນລະເມືອງ, ໃນນັ້ນ 4% ແມ່ນພິການໜັກ. ຈຳນວນເດັກໃນເກນອາຍຸເຂົ້າຮຽນປະຖົມ ແລະ ມັດທະຍົມ ໃນ ສ.ປ.ປ ລາວ ໃນປີ 2008 ແມ່ນ 1, 135, 000 ຄົນ, ດັ່ງນັ້ນ ຈຶ່ງຄາດຄະເນວ່າ ມີເດັກພິການໃນເກນອາຍຸເຂົ້າຮຽນ ປະມານ 113, 500 ຄົນ.

ການສຳຫຼວດການຮູ້ໜັງສືທົ່ວປະເທດ ປີ 2001 ໄດ້ສະແດງໃຫ້ເຫັນເຖິງຄວາມຫຼຸດໂຕນກັນລະຫວ່າງ ຍິງ-ຊາຍ ແລະ ລະຫວ່າງປະຊາຊົນບັນດາເຜົ່າ. ໂດຍສະເລ່ຍແລ້ວ 45% ຂອງປະຊາກອນກຸ່ມອາຍຸ 15-59 ປີ ເພດຊາຍ ມີຄວາມຮູ້ໜັງສືໃນລະດັບທີ່ໃຊ້ໄດ້, ສ່ວນເພດຍິງແມ່ນມີພຽງ 30%. ຄວາມຫຼຸດໂຕນດັ່ງກ່າວຍິ່ງມີຫຼາຍ ຖ້າແຍກເປັນແຕ່ລະໝວດພາສາ ຄື: ໝວດພາສາລາວ-ໄຕ 56% ສຳລັບເພດຊາຍ ແລະ 48% ສຳລັບເພດຍິງ, ໝວດພາສາມອນ-ຂະແມ 36% ສຳລັບເພດຊາຍ ແລະ 23% ສຳລັບເພດຍິງ, ໝວດພາສາຈີນ-ຕິເບດ 26% ສຳລັບເພດຊາຍ ແລະ 16% ສຳລັບເພດຍິງ, ໝວດພາສາມົ້ງ-ອິວມຽນ 39% ສຳລັບເພດຊາຍ ແລະ 12% ສຳລັບເພດຍິງ.

ນອກຈາກນັ້ນ ຍັງມີກຸ່ມດ້ອຍໂອກາດອື່ນໆຈຳນວນໜຶ່ງບໍ່ໄດ້ເຂົ້າຮຽນ ເປັນຕົ້ນ ເດັກຂ້າງຖະໜົນ, ເດັກທີ່ຖືກໃຊ້ແຮງງານ, ເດັກກຳພ້າ-ກຳພອຍ, ຜູ້ທີ່ຕົກເປັນເຫຍື່ອຂອງຄວາມຮຸນແຮງ, ການຄ້າມະນຸດ, ນັກຮຽນຍິງທີ່ຖືພາ, ເດັກທີ່ຕິດເຊື້ອ ແລະ ຮັບຜົນກະທົບຈາກເຊື້ອເອດ, ເດັກທີ່ກະທຳຜິດ ກົດໝາຍ ທີ່ຖືກຄຸມຂັງ ຫຼື ຢູ່ໃນສູນບຳບັດຕ່າງໆ.

## III. ສາເຫດທີ່ພາໃຫ້ກຸ່ມດ້ອຍໂອກາດບໍ່ສາມາດເຂົ້າເຖິງການສຶກສາ

ສາເຫດທີ່ພາໃຫ້ກຸ່ມດ້ອຍໂອກາດຈຳນວນໜຶ່ງທີ່ກ່າວມາຂ້າງເທິງ ບໍ່ສາມາດເຂົ້າເຖິງການສຶກສາແມ່ນເນື່ອງມາຈາກ ຫຼາຍປັດໄຈຕົ້ນຕໍ ດັ່ງນີ້:

- ຄຸນນະພາບຂອງການສຶກສາຍັງຕ່ຳ, ເປັນຕົ້ນຄູຍັງຂາດປະສົບການ ແລະ ກຳລັງໃຈໃນການສິດສອນ, ຫຼັກສູດ, ອຸປະກອນການຮຽນ-ການສອນ ຍັງບໍ່ສອດຄ່ອງກັບຄວາມຕ້ອງການຂອງຜູ້ຮຽນ ແລະ ສະພາບຕົວຈິງຂອງທ້ອງຖິ່ນ, ຂາດເຂີນ ອາຄານ ສະຖານທີ່ ແລະ ການບໍລິການຕ່າງໆ.
- ບາງຄ່ານິຍົມ, ຮີດຄອງປະເພນີ, ທັດສະນະຄະຕິທີ່ມີຕໍ່ເພດຍິງ, ຄົນພິການ ແລະ ກຸ່ມດ້ອຍໂອກາດອື່ນໆ ຍັງຖ່ວງດຶງການສຶກສາ ຂອງກຸ່ມຄົນດັ່ງກ່າວ.
- ຄວາມທຸກຍາກຂາດເຂີນເຮັດໃຫ້ຫຼາຍຄອບຄົວບໍ່ສາມາດຮັບພາລະຄ່າໃຊ້ຈ່າຍ ເພື່ອສົ່ງລູກຫຼານຂອງຕົນເຂົ້າໂຮງຮຽນ. ນອກຈາກນັ້ນ, ຍັງຮຽກຮ້ອງໃຫ້ເດັກຕ້ອງຊ່ວຍເຫຼືອຄອບຄົວໃນການເຮັດໄຮ່ເຮັດນາ ແລະ ຊອກຢູ່ຫາກິນ.
- ການຕັ້ງຖິ່ນຖານຂອງປະຊາຊົນສ່ວນໃຫຍ່ຢູ່ໃນເຂດຫ່າງໄກສອກຫຼີກແລະກະແຈກກະຈາຍ, ເຮັດໃຫ້ການຂະຫຍາຍຕາໜ່າງບໍລິການການສຶກສາຍັງບໍ່ທົ່ວເຖິງ ແລະ ການເຂົ້າເຖິງການສຶກສາຂອງປະຊາຊົນ ໃນເຂດດັ່ງກ່າວພົບຄວາມຫຍຸ້ງຍາກ.
- ຄວາມຫຍຸ້ງຍາກ ໃນການເຂົ້າໃຈເນື້ອໃນບົດຮຽນ ຂອງນັກຮຽນຊົນເຜົ່າຜູ້ທີ່ເວົ້າພາສາລາວບໍ່ໄດ້, ໂດຍສະເພາະໃນຂັ້ນ ປ.1-ປ.3, ເປັນສາເຫດໜຶ່ງທີ່ພາໃຫ້ມີອັດຕາການຄ້າງຫ້ອງ ແລະ ປະລະສູງ.

- ນິຕິກຳບາງສະບັບ ຍັງບໍ່ສາມາດຕອບສະໜອງຕໍ່ຄວາມຕ້ອງການຂອງຜູ້ຮຽນເພດຍິງ, ຊົນເຜົ່າ, ຄົນພິການ ແລະ ຜູ້ທີ່ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ສັງຄົມ.

- ຂາດຄວາມສາມາດຂອງບຸກຄະລາກອນ ແລະ ອົງກອນຕ່າງໆທີ່ກ່ຽວຂ້ອງໃນການສະໜັບສະໜູນການສຶກສາຮຽນຮ່ວມຍັງຈຳກັດ; ການປະສານງານລະຫວ່າງພາກສ່ວນຕ່າງໆຍັງບໍ່ທັນໄດ້ດີ.

- ກົນໄກ ການເກັບກຳ ແລະ ວິເຄາະວິໄຈຂໍ້ມູນ ການສຶກສາຂອງກຸ່ມດ້ອຍໂອກາດ ຍັງບໍ່ທັນເຂັ້ມແຂງ, ໂດຍສະເພາະ ການແຍກຂໍ້ມູນຕາມ ເພດ, ເຜົ່າ, ຄວາມເປັນພິການ, ຄວາມທຸກຍາກ ທີ່ເປັນປະໂຫຍດໃຫ້ແກ່ການວາງແຜນ ແລະ ຕິດຕາມປະເມີນຜົນ ຍັງບໍ່ທັນຄົບຖ້ວນ.

- ການລົງທຶນໃສ່ການສຶກສາເວົ້າລວມ, ເວົ້າສະເພາະ ການສຶກສາສຳລັບຜູ້ດ້ອຍໂອກາດຍັງມີຈຳກັດ.

## IV. ຄາດໝາຍສູ້ຊົນ

ຈຸດປະສົງຫຼັກຂອງແຜນຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມແມ່ນເພື່ອປະກອບສ່ວນເຂົ້າໃນການບັນລຸເປົ້າໝາຍຕ່າງໆ ຕາມທີ່ໄດ້ກຳນົດໃນແຜນງານແຫ່ງຊາດການສຶກສາເພື່ອທຸກຄົນ 2003-2015, ແຜນຍຸດທະສາດການປະຕິຮູບລະບົບການສຶກສາ 2006-2015, ຂອບພັດທະນາຂະແໜງການສຶກສາ 2009-2015, ກໍ່ຄືແຜນພັດທະນາຂະແໜງການສຶກສາ 2011-2015, **ໂດຍເນັ້ນໜັກການແກ້ໄຂຄວາມຫຼຸດໂຕນແລະຮັບປະກັນຄວາມສະເໝີພາບລະຫວ່າງ ຍິງ-ຊາຍ, ຊົນເຜົ່າ ແລະ ເມືອງຕ່າງໆ ໃນທຸກຕົວຊີ້ວັດທາງການສຶກສາ ແລະ ເພື່ອຕອບສະໜອງຄວາມຕ້ອງການທາງດ້ານການສຶກສາຂອງຄົນພິການ**:

ກ) ຮັບປະກັນໃຫ້ 39% ຂອງເດັກນ້ອຍ ໃນເກນອາຍຸ 3-5 ປີ ໄດ້ຜ່ານການກຽມຄວາມພ້ອມໃນຊຸມຊົນ, ໃນໂຮງລ້ຽງເດັກ, ອະນຸບານ, ແລະ ຫ້ອງກຽມປະຖົມ **ໂດຍສະເພາະໃຫ້ເອົາໃຈໃສ່ພິເສດເດັກຍິງຊົນເຜົ່າຈາກຊຸມຊົນທຸກຍາກ ແລະ ເດັກພິການ**.

ຂ) ບັນລຸອັດຕາການເຂົ້າຮຽນສຸດທິຊັ້ນປະຖົມສຶກສາ ໃຫ້ໄດ້ 98%, ອັດຕາການເຂົ້າຮຽນໃໝ່ຊັ້ນປະຖົມສຶກສາ ໃຫ້ໄດ້ 100% ແລະ ອັດຕາລອດເຫຼືອຊັ້ນປະຖົມສຶກສາໃຫ້ໄດ້ 95%, **ພ້ອມທັງຮັບປະກັນຄວາມສະເໝີພາບ ຍິງ-ຊາຍ ພາຍໃນປີ 2015.**

ຄ) ບັນລຸອັດຕາການເຂົ້າຮຽນລວມຊັ້ນມັດທະຍົມຕອນຕົ້ນ ແລະ ມັດທະຍົມຕອນປາຍ ໃຫ້ໄດ້ 75% **ພ້ອມທັງຮັບປະກັນຄວາມສະເໝີພາບຍິງ-ຊາຍ ພາຍໃນປີ 2015.**

ງ) ຮັບປະກັນໃຫ້ມີນັກຮຽນເຕັກນິກວິຊາຊີບ ຢ່າງຕໍ່າ 50,000 ຄົນ, ໃນນັ້ນ **50% ເປັນເພດຍິງ ແລະ 20% ມາຈາກຄອບຄົວທຸກຍາກ.**

ຈ) ເພີ່ມການເຂົ້າຮຽນໃນສະຖາບັນຊັ້ນສູງ ແລະ ສະຖາບັນສ້າງຄູ **ໂດຍ ຮັບປະກັນໃຫ້ມີເພດຍິງ 50% ແລະ 20% ມາຈາກຄອບຄົວທຸກຍາກ.**

ສ) ເພີ່ມອັດຕາການຮູ້ໜັງສືສຳລັບແມ່ຍິງກຸ່ມອາຍຸ 15-40 ປີ ໃຫ້ໄດ້ 93% ໃນປີ 2015.

ຊ) ຮັບປະກັນໃຫ້**ບັນດາຫຼັກການຂອງການຮຽນຮ່ວມ,** ໂດຍສະເພາະສິດທິມະນຸດ, ສິດທິເດັກ, ຄວາມສະເໝີພາບ ຍິງ-ຊາຍ, ຊົນເຜົ່າ ແລະ ຄົນພິການ **ໄດ້ຮັບການເຊື່ອມສານເຂົ້າໃນທຸກດ້ານ ແລະ ທຸກລະດັບຂອງລະບົບການສຶກສາ ພາຍໃນປີ 2015**, ເປັນຕົ້ນ ການພັດທະນາຊັບພະຍາກອນມະນຸດ, ນະໂຍບາຍການບັນຈຸສັບຊ້ອນ ແລະ ເລື່ອນຊັ້ນ-ເລື່ອນຂັ້ນພະນັກງານ, ການພັດທະນາຫຼັກສູດ, ສື່ການຮຽນ-ການສອນ, ການຄຸ້ມຄອງໂຮງຮຽນ ແລະ ການຮຽນການສອນຕົວຈິງໃນຫ້ອງຮຽນ.

ຍ) ໃນປີ 2015, ຮັບປະກັນ ຢ່າງໜ້ອຍ **12% ຂອງຈຳນວນໂຮງຮຽນ ແລະ ສະຖາບັນການສຶກສາ ໃນທຸກແຂວງ ທົ່ວປະເທດ ໄດ້ຮັບການສະໜອງຊັບພະຍາກອນທີ່ຈຳເປັນ ເພື່ອໃຫ້ສາມາດສະໜອງການສຶກສາທີ່ມີຄຸນນະພາບໃຫ້ແກ່ຜູ້ຮຽນທີ່ມີຄວາມຕ້ອງການພິເສດ** ປະເພດຕ່າງໆ ເຊັ່ນ ເພດຍິງ, ຊົນເຜົ່າ, ຄົນພິການ ແລະ ຜູ້ທີ່ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ສັງຄົມ.

ຈ) ໃນປີ 2015, ຮັບປະກັນ ໃຫ້ເດັກພິການເບົາ 30% ໄດ້ເຂົ້າຮຽນໃນຂັ້ນ ປ.1 - ມ.4.

## V. ຫຼັກການຍຸດທະສາດ

ເພື່ອຮັບປະກັນການຈັດຕັ້ງປະຕິບັດ ນະໂຍບາຍແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມ ໃຫ້ສຳເລັດຜົນ ຈຶ່ງໄດ້ກຳນົດບັນດາຫຼັກການຍຸດທະສາດ ທີ່ຄອບຄຸມທຸກຂົງເຂດການປະຕິບັດງານຂອງການສຶກສາຮຽນຮ່ວມ ດັ່ງນີ້:

ກ) **ຮັບຮູ້**ວ່າການສຶກສາຮຽນຮ່ວມ ແມ່ນຂະບວນການ ຕອບສະໜອງຕໍ່ຄວາມຕ້ອງການອັນຫຼາກຫຼາຍຂອງຜູ້ຮຽນຢ່າງຕໍ່ເນື່ອງ ແລະ ເປັນລະບົບ, ເພື່ອແນໃສ່ຫຼຸດຜ່ອນບັນດາອຸປະສັກທີ່ກີດກັ້ນ ການເຂົ້າເຖິງການສຶກສາ ກໍ່ຄືບັນດາອຸປະສັກທີ່ມີໃນສະພາບແວດລ້ອມການຮຽນຮູ້ ເພື່ອຮັບປະກັນວ່າຜູ້ຮຽນທຸກຄົນ ໄດ້ເຂົ້າຮຽນ ແລະ ຮຽນຮູ້ ຢ່າງແທ້ຈິງ.

ຂ) **ເຊື່ອມສານວຽກງານຮຽນຮ່ວມ** ເຂົ້າໃນວຽກງານຂອງທຸກພາກສ່ວນ ພາຍໃນຂະແໜງການສຶກສາ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາອົງປະກອບຂອງການສຶກສາຮຽນຮ່ວມ ໃນບັນດາໂຄງການພັດທະນາການສຶກສາທີ່ມີຢູ່ແລ້ວ.

ຄ) **ແບ່ງຂັ້ນຄຸ້ມຄອງ ແລະ ຄວາມຮັບຜິດຊອບລົງສູ່ທ້ອງຖິ່ນ**, ພ້ອມທັງ **ສ້າງຄວາມສາມາດ ແລະ ຄວາມເຂົ້າໃຈ** ໃຫ້ຜູ້ທີ່ມີສ່ວນຮັບຜິດຊອບຂອງຂະແໜງການທີ່ກ່ຽວຂ້ອງ ແລະ ພາຍໃນຊຸມຊົນ ໃນການສະໜອງການສຶກສາ ໃຫ້ເຂົ້າໃຈສາເຫດ ທີ່ພາໃຫ້ກຸ່ມດ້ອຍໂອກາດບໍ່ສາມາດເຂົ້າເຖິງການສຶກສາ, ສາມາດວິເຄາະ ແລະ ແກ້ໄຂບັນຫາດັ່ງກ່າວ ຢ່າງແທດເໝາະກັບສະພາບຕົວຈິງຂອງທ້ອງຖິ່ນ.

ງ) **ປະສານງານ ແລະ ສ້າງເຄືອຂ່າຍ** ເພື່ອຮັບປະກັນໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງກັບການສຶກສາຮຽນຮ່ວມ, ຮວມທັງອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງທາງສັງຄົມ, ອົງການບໍ່ສັງກັດລັດຖະບານ, ຊຸມຊົນໃນທ້ອງຖິ່ນ ແລະ ຄູ່ຮ່ວມພັດທະນາສາກົນ ເຮັດວຽກຮ່ວມກັນຢ່າງມີປະສິດທິຜົນ ແລະ ມີການແລກປ່ຽນບົດຮຽນອັນດີ ເຊິ່ງກັນ ແລະ ກັນ.

ຈ) **ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ, ເດັກຍິງ, ຊົນເຜົ່າ, ຄົນພິການ ແລະ ບັນດາກຸ່ມດ້ອຍໂອກາດຕ່າງໆ** ເພື່ອຮັບປະກັນໃຫ້ເຂົາເຈົ້າມີບົດບາດໃນການຕັດສິນໃຈ ໃນການວາງແຜນ ແລະ ຈັດຕັ້ງປະຕິບັດ ການສຶກສາຮຽນຮ່ວມ.

ຊ) **ພັດທະນາວິທີການຕ່າງໆ ທີ່ຫຼາກຫຼາຍ ເພື່ອສະໜອງການສຶກສາ** ທີ່ມີປະສິດທິພາບ ໃຫ້ແກ່ກຸ່ມດ້ອຍໂອກາດ.

# VI. ຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດ ວ່າດ້ວຍການສຶກສາຮຽນຮ່ວມ (2011-2015)

ເພື່ອສະດວກໃນການເປັນບ່ອນອີງ, ແຜນຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດ ວ່າດ້ວຍ ການສຶກສາຮຽນຮ່ວມ ລຸ່ມນີ້ ໄດ້ຖືກຈັດລຽງໄປຕາມລຳດັບ **ຂົງເຂດຍຸດທະສາດ 9 ຂໍ້ ຂອງນະໂຍບາຍແຫ່ງຊາດ ວ່າດ້ວຍການສຶກສາຮຽນຮ່ວມ** ເລກທີ 1170/ສສ ລົງວັນທີ 29 ພະຈິກ 2010, ຮັບຮອງປະກາດໃຊ້ ໂດຍດຳລັດເລກທີ 509/ນຍ ລົງວັນທີ 07 ທັນວາ 2010.

| ໜ້າວຽກຫຼັກ | ໄລຍະ ປະຕິບັດ | ແຜນງານ/ໂຄງການຂອງແຜນ ພັດທະນາຂະແໜງການສຶກສາ 2011-2015 ທີ່ກ່ຽວຂ້ອງ[2] | ພາກສ່ວນ ຮັບຜິດຊອບ | ຄາດຄະເນງົບປະມານ (ລ້ານກີບ) | | |
|---|---|---|---|---|---|---|
| | | | | ຈາກລັດຖະບານ | ຈາກແຫຼ່ງອື່ນ | ລວມ |
| **ຍຸດທະສາດ ທີ 1: ສືບຕໍ່ພັດທະນາສະພາບແວດລ້ອມ ທາງດ້ານສັງຄົມ ເພື່ອການຮຽນຮູ້ທີ່ເປັນມິດ ແລະ ເອື້ອອຳນວຍ ສຳລັບຜູ້ຮຽນທຸກຄົນ ໃນທຸກຂັ້ນ-ທຸກສາຍ ນັບແຕ່ຂັ້ນອະນຸບານສຶກສາຈົນເຖິງການສຶກສາຂັ້ນສູງໂດຍສ້າງມາດຕະຖານຄຸນນະພາບການສຶກສາ ຮຽນຮ່ວມ; ສົ່ງເສີມຄ່ານິຍົມ, ຮີດຄອງປະເພນີ ແລະ ທັດສະນະຄະຕິທີ່ດີ ຕໍ່ກັບເພດຍິງ, ຊົນເຜົ່າ, ຄົນພິການ ແລະ ກຸ່ມດ້ອຍໂອກາດປະເພດຕ່າງໆ.** | | | | | | |
| | | | **ລວມງົບປະມານ ສຳລັບ ຍຸດທະສາດ ທີ 1** | **1, 884, 338** | **434, 995** | **2, 319, 333** |
| 1. ໂຄສະນາຂົນຂວາຍທົ່ວປວງຊົນເພື່ອ ປູກຈິດສຳນຶກ ກ່ຽວກັບ ຄວາມສຳຄັນ ຂອງການສຶກສາ, ສິດທິທາງການສຶກສາ ຂອງພົນລະເມືອງລາວທຸກຄົນ ແລະ ພັນທະຂອງສັງຄົມໃນການ ຮັບປະກັນສິດທິດັ່ງກ່າວ, ຕ້ານການຈຳແນກ ແລະ ການໃຊ້ຄວາມຮຸນແຮງຕໍ່ເພດຍິງ, ຊົນເຜົ່າ, ຄົນພິການໃນຄອບຄົວ, ໃນລະບົບການສຶກສາ ແລະ ສັງຄົມທົ່ວໄປ. | 2011-2015 | 1.5 ຂະຫຍາຍໂອກາດ/ຮຽນຮ່ວມ | ສູນການສຶກສາຮຽນຮ່ວມ, ກະຊວງ ສາທາລະນະສຸກ, ກະຊວງຖະແຫຼງ ຂ່າວ-ວັດທະນະທຳ, ກຳມາທິການບັນດາເຜົ່າ, ຄະນະກຳມະການແຫ່ງຊາດເພື່ອຄົນພິການ, ສະມາຄົມ ຄົນພິການ, ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ, ຄະນະກຳມາທິການ ການສຶກສາເພື່ອທຸກຄົນ, ຄະນະກຳມາທິການເພື່ອແມ່ແລະເດັກແຫ່ງຊາດ, ອົງການຈັດຕັ້ງ ມະຫາຊົນ (ແມ່ຍິງ, ຊາວໜຸ່ມ, ກຳມະບານ), ສູນກາງແນວລາວສ້າງຊາດ, ອົງການປົກຄອງທ້ອງຖິ່ນ, ພະແນກສຶກສາທິການ ແລະກິລາແຂວງ, ຫ້ອງການສຶກສາທິການແລະກິລາເມືອງ, ຄະນະພັດທະນາການສຶກສາ ຂັ້ນບ້ານ, ອົງການບໍລິຫານການສຶກສາ ແລະ ພາກສ່ວນອື່ນໆໃນທຸກຂັ້ນ | 244 | 56 | 300 |

[2] ເບິ່ງເອກະສານຊ້ອນທ້າຍ 1

| ໜ້າວຽກຫຼັກ | ໄລຍະ ປະຕິບັດ | ແຜນງານ/ໂຄງການຂອງແຜນ ພັດທະນາຂະແໜງການສຶກສາ 2011-2015 ທີ່ກ່ຽວຂ້ອງ[2] | ພາກສ່ວນ ຮັບຜິດຊອບ | ຄາດຄະເນງົບປະມານ (ລ້ານກີບ) | | |
|---|---|---|---|---|---|---|
| | | | | ຈາກລັດຖະບານ | ຈາກແຫຼ່ງອື່ນ | ລວມ |
| 2. ເຜີຍແຜ່ນິຕິກຳ, ແນວຄວາມຄິດ, ນິຍາມແລະຄຳສັບ ທີ່ກ່ຽວຂ້ອງກັບການສຶກສາຮຽນຮ່ວມ ເພື່ອສ້າງຄວາມເຂົ້າໃຈ ເປັນເອກະພາບໃນທົ່ວປະເທດ. | 2011-2015 | 1.5 ຂະຫຍາຍໂອກາດ/ຮຽນຮ່ວມ | (ເຊັ່ນດຽວກັນກັບ ຂໍ້ 1 ຂ້າງເທິງ) | 244 | 56 | 300 |
| 3. ສະໜອງໂກຕາ, ທຶນການສຶກສາ ແລະ ການຊ່ວຍເຫຼືອທີ່ຈຳເປັນ ໃຫ້ແກ່ ຜູ້ຮຽນເພດຍິງ, ຊົນເຜົ່າ, ພິການ ແລະ ກຸ່ມດ້ອຍໂອກາດອື່ນໆ ເພື່ອເພີ່ມອັດຕາການເຂົ້າຮຽນ ແລະ ຫຼຸດຜ່ອນຄວາມຫຼຸດໂຕນກັນ ໃນການສຳເລັດການສຶກສາ ໃນທຸກຊັ້ນ-ທຸກສາຍຂອງການສຶກສາ. | 2011-2015 | 1.1 ຂະຫຍາຍໂອກາດ/ຫຼຸດຜ່ອນຄ່າໃຊ້ຈ່າຍ<br>1.2 ຂະຫຍາຍໂອກາດ/ຫຼຸດຜ່ອນການຄ້າງຫ້ອງ-ປະລະ<br>1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>1.7 ຂະຫຍາຍໂອກາດ/ມັດທະຍົມ-ເຕັກນິກ ອາຊີວະ-ຊັ້ນສູງ<br>3.5 ບໍລິຫານຄຸ້ມຄອງ/ການເງິນສຳລັບຜູ້ທຸກຍາກ | ກົມການເງິນ, ກົມຈັດຕັ້ງແລະພະນັກງານ, ສູນການສຶກສາຮຽນຮ່ວມ, ກົມວິຊາການທີ່ກ່ຽວຂ້ອງ, ພະແນກສຶກສາທິການແລະກິລາແຂວງ, ຫ້ອງການສຶກສາທິການ ແລະກິລາເມືອງ | 1, 648, 033 | 380, 445 | 2, 028, 478 |
| 4. ທົບທວນ ບັນດາຂໍ້ກຳນົດ, ກົດລະບຽບ ຂອງໂຮງຮຽນ, ສູນ ແລະ ສະຖາບັນການສຶກສາຕ່າງໆ ເພື່ອຮັບປະກັນໃຫ້ ເພດຍິງ, ຊົນເຜົ່າ, ຄົນພິການ ແລະ ກຸ່ມດ້ອຍໂອກາດ ຕ່າງໆໄດ້ເຂົ້າເຖິງການສຶກສາ ໃຫ້ຫຼາຍຂຶ້ນ, ເຊັ່ນ: ອະນຸຍາດໃຫ້ນັກຮຽນພິການເຂົ້າຮຽນໃນສະຖາບັນການສຶກສາຕ່າງໆ, ຮວມທັງສະຖາບັນສ້າງຄູ; ອຳນວຍຄວາມສະດວກໃຫ້ ນັກຮຽນຍິງທີ່ຖືພາໄດ້ມີທາງເລືອກໃນການສືບຕໍ່ຮໍ່າຮຽນ ແລະ ສ້າງເງື່ອນໄຂໃຫ້ເຂົາເຈົ້າສາມາດ ກັບມາຮຽນ ພາຍຫຼັງເກີດລູກ. | 2012 | 1.2 ຂະຫຍາຍໂອກາດ/ຫຼຸດຜ່ອນການຄ້າງຫ້ອງ-ປະລະ<br>1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>1.7 ຂະຫຍາຍໂອກາດ/ມັດທະຍົມ-ເຕັກນິກ ອາຊີວະ-ຊັ້ນສູງ | ກົມວິຊາການ, ກົມຈັດຕັ້ງແລະພະນັກງານ, ສູນການສຶກສາຮຽນຮ່ວມ, ສະຖາບັນການສຶກສາຕ່າງໆ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | 74 | 17 | 91 |
| 5. ພັດທະນາ ແລະ ປັບປຸງສື່ການຮຽນ-ການສອນສຳລັບການສຶກສາໃນທຸກຊັ້ນ-ທຸກສາຍ ເພື່ອນຳສະເໜີເນື້ອໃນ ກ່ຽວກັບເພດຍິງ, ຊົນເຜົ່າ, ຄົນພິການ ແລະ ກຸ່ມ ດ້ອຍໂອກາດ ປະເພດຕ່າງໆ ໃນທາງສ້າງສັນໃຫ້ຫຼາຍຂຶ້ນ. | 2011-2015 | 1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>2.1 ຄຸນນະພາບ/ຫຼັກສູດ | ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ, ສະຖາບັນຄົ້ນຄ້ວາພາສາສາດ, ສູນການສຶກສາຮຽນຮ່ວມ, ກົມວິຊາການທີ່ກ່ຽວຂ້ອງ, ມະຫາວິທະຍາໄລ, ກະຊວງສາທາລະນະສຸກ | 235, 595 | 54, 387 | 289, 982 |

| ໜ້າວຽກຫຼັກ | ໄລຍະ ປະຕິບັດ | ແຜນງານ/ໂຄງການຂອງແຜນ ພັດທະນາຂະແໜງການສຶກສາ 2011-2015 ທີ່ກ່ຽວຂ້ອງ[2] | ພາກສ່ວນ ຮັບຜິດຊອບ | ຄາດຄະເນງົບປະມານ (ລ້ານກີບ) | | |
|---|---|---|---|---|---|---|
| | | | | ຈາກລັດຖະບານ | ຈາກແຫຼ່ງອື່ນ | ລວມ |
| 6. ສົ່ງເສີມຈັນຍາບັນຂອງຄູ ແລະ ນຳໃຊ້ທຸກຮູບແບບ ຂອງການສຶກສາ ເພື່ອລຶບລ້າງ ຄວາມຊິນເຄີຍ ຄອງເດີມ ທີ່ມີລັກສະນະຈຳແນກຕໍ່ເພດຍິງ, ຊົນເຜົ່າ, ຄົນພິການ ແລະ ກຸ່ມດ້ອຍໂອກາດ ປະເພດຕ່າງໆ | 2011-2015 | 1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>2.1 ຄຸນນະພາບ/ຫຼັກສູດ<br>2.2 ຄຸນນະພາບ/ສ້າງ-ບຳລຸງຄູ | ກົມສ້າງຄູ, ກົມຈັດຕັ້ງແລະພະນັກງານ, ສະຖາບັນ ຄົ້ນຄ້ວາວິທະຍາສາດການສຶກສາ, ກົມວິຊາການທີ່ ກ່ຽວຂ້ອງ, ສູນການສຶກສາຮຽນຮ່ວມ, ຄະນະກຳມາ ທິການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ອົງການປົກຄອງທຸກລະດັບ | 42 | 10 | 52 |
| 7. ເຊື່ອມສານບັນດາຫຼັກການ ຂອງການສຶກສາ ຮຽນຮ່ວມ ເຂົ້າໃນມາດຕະຖານຄຸນນະພາບ ສຳລັບ ການສຶກສາ ທຸກຊັ້ນ-ທຸກສາຍ ແລະ ປັບປຸງ ລະບົບ ການວັດຜົນການຮຽນ ສຳລັບນັກຮຽນ ທີ່ຈົບຊັ້ນ ປ.5, ມ.4 ແລະ ມ. 7 ສຳລັບທັງພາກລັດ ແລະ ເອກະຊົນ. | 2011-2015 | 1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>2.5 ຄຸນນະພາບ/ໂຮງຮຽນ-ນັກຮຽນ | ສູນຮັບປະກັນຄຸນນະພາບການສຶກສາ, ສະຖາບັນ ຄົ້ນຄ້ວາວິທະຍາສາດການສຶກສາ, ກົມກວດກາ, ກົມຈັດຕັ້ງແລະພະນັກງານ, ກົມອະນຸບານ ແລະ ປະຖົມ ສຶກສາ, ກົມມັດທະຍົມ ສຶກສາ, ສູນການ ສຶກສາຮຽນຮ່ວມ, | 106 | 24 | 130 |
| **ຍຸດທະສາດ ທີ 2: ປະຕິບັດນະໂຍບາຍລຶບລ້າງ ການເກັບຄ່າລົງທະບຽນເຂົ້າຮຽນ ແລະ ຄ່າຮຽນໃນຊັ້ນປະຖົມສຶກສາ ແລະ ມັດທະຍົມສຶກສາຕອນຕົ້ນ ໃນໂຮງຮຽນພາກລັດ.** | | | | | | |
| | | | **ລວມງົບປະມານ ສຳລັບ ຍຸດທະສາດ ທີ 2** | **1, 213, 393** | **280, 109** | **1, 493, 502** |
| 8. ຈັດຕັ້ງປະຕິບັດຂໍ້ຕົກລົງກ່ຽວກັບການລຶບລ້າງ ການເກັບຄ່າລົງທະບຽນເຂົ້າຮຽນ ແລະ ຄ່າທຳນຽມ ອື່ນໆ ໃນຊັ້ນປະຖົມສຶກສາ ແລະ ມັດທະຍົມສຶກສາ ຕອນຕົ້ນ ໃນໂຮງຮຽນພາກລັດ ຢ່າງເຂັ້ມງວດ ໃນ ຂອບເຂດທົ່ວປະເທດ. | 2011-2015 | 1.1 ຂະຫຍາຍໂອກາດ/ຫຼຸດຜ່ອນຄ່າໃຊ້ຈ່າຍ<br>1.2 ຂະຫຍາຍໂອກາດ/ຫຼຸດຜ່ອນການຄ້າງ ຫ້ອງ-ປະລະ<br>1.5 ຂະຫຍາຍໂອກາດ/ຮຽນຮ່ວມ | ກົມການເງິນ, ກົມປະຖົມ-ອະນຸບານ ສຶກສາ, ກົມມັດທະຍົມສຶກສາ, ພະແນກ ສຶກສາທິການ ແລະກິລາແຂວງ, ຫ້ອງການສຶກສາທິການ ແລະກິລາເມືອງ, ກົມກວດກາ, ສູນການສຶກສາຮຽນຮ່ວມ | 162 | 38 | 200 |
| 9. ຈັດຕັ້ງປະຕິບັດຄູ່ມືແນະນຳກ່ຽວກັບ ລະບຽບ ການ ຄຸ້ມຄອງກ້ອນທຶນບໍລິຫານໂຮງຮຽນ ເພື່ອ ກຳນົດເງື່ອນໄຂການນຳໃຊ້ທຶນຢ່າງຖືກຕ້ອງ ແລະ ຮັບປະກັນ ຄວາມໂປ່ງໃສໃນການຄຸ້ມຄອງນຳໃຊ້ ກ້ອນທຶນດັ່ງກ່າວ. | 2011-2015 | 1.1 ຂະຫຍາຍໂອກາດ/ຫຼຸດຜ່ອນຄ່າໃຊ້ຈ່າຍ<br>1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>3.5 ບໍລິຫານຄຸ້ມຄອງ/ການເງິນສຳລັບ ຜູ້ທຸກຍາກ | ກົມການເງິນ, ກົມອະນຸບານ ແລະ ປະຖົມ ສຶກສາ, ກົມມັດທະຍົມສຶກສາ, ສູນການ ສຶກສາຮຽນຮ່ວມ | 232 | 54 | 286 |
| 10. ສະໜອງກ້ອນທຶນບໍລິຫານເພື່ອທົດແທນ ການ ສູນເສຍລາຍຮັບ ຂອງ ໂຮງຮຽນ ທີ່ເຄີຍໄດ້ມາຈາກ ການ ເກັບຄ່າ ບໍລິການ ຕ່າງໆ, ໂດຍ ໃຫ້ບູລິມະ ສິດແກ່ 56 ເມືອງທີ່ດ້ອຍໂອກາດທາງການສຶກສາ. | 2011-2015 | 1.1 ຂະຫຍາຍໂອກາດ/ຫຼຸດຜ່ອນຄ່າໃຊ້ຈ່າຍ<br>1.2 ຂະຫຍາຍໂອກາດ/ຫຼຸດຜ່ອນການຄ້າງ ຫ້ອງ-ປະລະ<br>1.5 ຂະຫຍາຍໂອກາດ/ຮຽນຮ່ວມ | ກົມການເງິນ, ກົມແຜນການແລະການ ຮ່ວມມື, ກົມອະນຸບານ ແລະ ປະຖົມ ສຶກສາ, ກົມມັດທະຍົມສຶກສາ, ສູນການ ສຶກສາຮຽນຮ່ວມ | 1, 212, 998 | 280, 018 | 1, 493, 016 |

| ໜ້າວຽກຫຼັກ | ໄລຍະ ປະຕິບັດ | ແຜນງານ/ໂຄງການຂອງແຜນ ພັດທະນາຂະແໜງການສຶກສາ 2011-2015 ທີ່ກ່ຽວຂ້ອງ[2] | ພາກສ່ວນ ຮັບຜິດຊອບ | ຄາດຄະເນງົບປະມານ (ລ້ານກີບ) | | |
|---|---|---|---|---|---|---|
| | | | | ຈາກລັດຖະບານ | ຈາກແຫຼ່ງອື່ນ | ລວມ |
| **ຍຸດທະສາດ ທີ 3: ຮັບປະກັນໃຫ້ເດັກທຸກຄົນ ໄດ້ເຂົ້າຮຽນຊັ້ນປະຖົມສຶກສາ, ສູ້ຊົນຫຼຸດຜ່ອນອັດຕາການຄ້າງຫ້ອງ ແລະ ອັດຕາການປະລະການຮຽນ ໂດຍການຂະຫຍາຍເຮືອນລ້ຽງເດັກ, ໂຮງຮຽນອະນຸບານ ແລະ ຫ້ອງກຽມປະຖົມ ແລະ ພັດທະນາມາດຕະຖານສະມັດຖະພາບ ການກຽມຄວາມພ້ອມ ສຳລັບເດັກ; ທັນປ່ຽນ ໂຮງຮຽນມູນລະປະຖົມໃຫ້ເປັນໂຮງຮຽນປະຖົມສົມບູນທີ່ສອນຄົບຫ້າຊັ້ນຮຽນ ໂດຍການນຳໃຊ້ການສອນຫ້ອງຄວບຢ່າງເປັນລະບົບ ແລະ ຄູເຄື່ອນທີ່ ໃນເຂດທີ່ມີຄວາມຈຳເປັນ; ສະໜອງການຊ່ວຍເຫຼືອເພີ່ມເຕີມ ພິເສດໃຫ້ແກ່ຄູສອນຫ້ອງ ປ1-ປ3 ເພື່ອຮັບປະກັນໃຫ້ນັກຮຽນ ສາມາດອ່ານ, ຂຽນ ແລະ ຄິດໄລ່ໄດ້ຢ່າງຄ່ອງແຄ້ວ; ດັດປັບປະຕິທິນການສຶກສາ ແລະ ຕາຕະລາງເວລາຮຽນ ໃຫ້ແທດເໝາະກັບຈຸດພິເສດ ຂອງທ້ອງຖິ່ນ.** | | | | | | |
| | | | **ລວມງົບປະມານ ສຳລັບ ຍຸດທະສາດ ທີ 3** | **1, 320, 833** | **304, 911** | **1, 625, 745** |
| 11. ພັດທະນານະໂຍບາຍແຫ່ງຊາດ ວ່າດ້ວຍການພັດທະນາເດັກກ່ອນໄວຮຽນແບບຮອບດ້ານ ສຳລັບເດັກ ອາຍຸ 0-6 ປີ ເພື່ອຮັບປະກັນ ໃຫ້ເດັກມີສຸຂະພາບແຂງແຮງ ແລະ ໂພຊະນາການທີ່ດີ, ມີພັດທະນາການທາງດ້ານຮ່າງກາຍ, ຈິດໃຈ, ອາລົມ ແລະ ສັງຄົມ ທີ່ເໝາະສົມ, ມີການກຽມພ້ອມເພື່ອເຂົ້າຮຽນຊັ້ນປະຖົມ ໄດ້ຢ່າງມີຜົນສຳເລັດ. | 2011 | 1.2 ຂະຫຍາຍໂອກາດ/ຫຼຸດຜ່ອນການຄ້າງຫ້ອງ-ປະລະ<br>1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>1.6 ຂະຫຍາຍໂອກາດ/ກ່ອນໄວຮຽນ | ກົມປະຖົມ-ອະນຸບານສຶກສາ, ຄະນະກຳມາທິການເພື່ອແມ່ແລະເດັກແຫ່ງຊາດ, ກະຊວງສາທາລະນະສຸກ, ກະຊວງຍຸຕິທຳ, ສູນກາງສະຫະພັນແມ່ຍິງລາວ | 317 | 73 | 390 |
| 12. ສຶກສາ ພໍ່ແມ່-ຜູ້ປົກຄອງ, ໂດຍສະເພາະແມ່ຍິງຜູ້ທີ່ມີລູກຄົນທຳອິດ, ກ່ຽວກັບການສົ່ງເສີມສຸຂະພາບ ແລະໂພຊະນາການ ຂອງແມ່ແລະເດັກ, ການລ້ຽງດູ ແລະ ການກະຕຸ້ນພັດທະນາການທາງດ້ານມັນສະໝອງຂອງເດັກ, ຮວມທັງການປ້ອງກັນ ແລະ ຫຼຸດຜ່ອນຄວາມເປັນພິການ. | 2011-2015 | 1.2 ຂະຫຍາຍໂອກາດ/ຫຼຸດຜ່ອນການຄ້າງຫ້ອງ-ປະລະ<br>1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>1.6 ຂະຫຍາຍໂອກາດ/ກ່ອນໄວຮຽນ | ກົມອະນຸບານ ແລະ ປະຖົມ ສຶກສາ, ກົມມັດທະຍົມສຶກສາ, ກົມການສຶກສາ ນອກໂຮງຮຽນ, ຄະນະກຳມາທິການເພື່ອແມ່ແລະເດັກແຫ່ງຊາດ, ກະຊວງ ສາທາລະນະສຸກ, ກະຊວງຍຸຕິທຳ, ສູນກາງສະຫະພັນແມ່ຍິງລາວ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ | 275 | 64 | 339 |
| 13. ຂະຫຍາຍ ເຮືອນລ້ຽງເດັກ, ໂຮງຮຽນອະນຸບານ ແລະ ຫ້ອງກຽມປະຖົມ ໃນເຂດທີ່ມີເງື່ອນໄຂ, ແລະ ດຳເນີນການທົດລອງ ປະຕິບັດການກຽມຄວາມພ້ອມ ສຳລັບເດັກກ່ອນໄວຮຽນໃນຊຸມຊົນ ໃນເຂດທີ່ບໍ່ສາມາດຈັດຕັ້ງຫ້ອງກຽມປະຖົມໄດ້ ເພື່ອຮັບປະກັນໃຫ້ເດັກ, ໂດຍສະເພາະເດັກຍິງ ແລະ ເດັກພິການ ໄດ້ຮັບການດູແລ ແລະ ກຽມຄວາມພ້ອມ ທີ່ມີ ຄຸນນະພາບ ຢ່າງໜ້ອຍ 2 ປີ. | 2011-2015 | 1.2 ຂະຫຍາຍໂອກາດ/ຫຼຸດຜ່ອນການຄ້າງຫ້ອງ-ປະລະ<br>1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>1.6 ຂະຫຍາຍໂອກາດ/ກ່ອນໄວຮຽນ<br>2.1 ຄຸນນະພາບ/ຫຼັກສູດ | ກົມອະນຸບານ ແລະ ປະຖົມ ສຶກສາ, ສະຖາ ບັນຄົ້ນຄ້ວາວິທະຍາສາດການສຶກສາ, ກະຊວງສາທາລະນະສຸກ, ສູນການສຶກສາຮຽນຮ່ວມ | 150, 684 | 34, 785 | 185, 469 |

| ໜ້າວຽກຫຼັກ | ໄລຍະ ປະຕິບັດ | ແຜນງານ/ໂຄງການຂອງແຜນ ພັດທະນາຂະແໜງການສຶກສາ 2011-2015 ທີ່ກ່ຽວຂ້ອງ[2] | ພາກສ່ວນ ຮັບຜິດຊອບ | ຄາດຄະເນງົບປະມານ (ລ້ານກີບ) | | |
|---|---|---|---|---|---|---|
| | | | | ຈາກລັດຖະບານ | ຈາກແຫຼ່ງອື່ນ | ລວມ |
| 14. ເນັ້ນໜັກການພັດທະນາບຸກຄະລິກພາບ ແລະ ຈຸດພິເສດ ຂອງເດັກກ່ອນໄວຮຽນ ເປັນຕົ້ນ: ການຮູ້ຈັກຕົນເອງເຊັ່ນ: ຄວາມໝັ້ນໃຈ, ຄວາມກ້າຫານ, ຄວາມວ່ອງໄວ,ຄວາມສາມາດທາງດ້ານພາສາ ແລະ ທັດສະນະໃນການຢູ່ຮ່ວມໝູ່ ແລະ ເຄົາລົບຄວາມແຕກຕ່າງ, ຄວາມເປັນລະບຽບຮຽບຮ້ອຍ, ການຄົ້ນຄິດແບບຕຶກຕອງ ຢ່າງມີເຫດຜົນ. | 2011-2015 | 1.2 ຂະຫຍາຍໂອກາດ/ຫຼຸດຜ່ອນການຄ້າງຫ້ອງ-ປະລະ<br>1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>1.6 ຂະຫຍາຍໂອກາດ/ການສຶກສາກ່ອນໄວຮຽນ<br>2.1 ຄຸນນະພາບ/ຫຼັກສູດ | ກົມອະນຸບານ ແລະ ປະຖົມ ສຶກສາ, ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ, ສູນການສຶກສາຮຽນຮ່ວມ, ກະຊວງສາທາລະນະສຸກ | 475 | 110 | 585 |
| 15. ຍົກລະດັບໂຮງຮຽນມູນລະປະຖົມໃຫ້ເປັນໂຮງຮຽນປະຖົມສົມບູນ ໂດຍນໍາໃຊ້ວິທີການສອນຫ້ອງຄວບທີ່ເປັນລະບົບ ເຊິ່ງລວມມີ ການສ້າງ ແລະ ບໍາລຸງຄູ, ປັບປຸງ ຄູ່ມືແນະນໍາ ແລະ ຫຼັກສູດ, ການສະໜອງສື່ການຮຽນ-ການສອນ ແລະ ປະຕິບັດຕາມນະໂຍບາຍແກ່ຄູສອນຫ້ອງຄວບ. | 2011-2015 | 1.2 ຂະຫຍາຍໂອກາດ/ຫຼຸດຜ່ອນການຄ້າງຫ້ອງ-ປະລະ<br>1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>2.2 ຄຸນນະພາບ/ສ້າງຄູ<br>2.3 ຄຸນນະພາບ/ບັນຈຸຄູ<br>2.4 ຄຸນນະພາບ/ສິ່ງຈູງໃຈຄູ | ກົມອະນຸບານ ແລະ ປະຖົມ ສຶກສາ, ກົມສ້າງຄູ, ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ, ສູນການສຶກສາຮຽນຮ່ວມ, ກົມຈັດຕັ້ງແລະພະນັກງານ, ກົມການເງິນ | 263, 455 | 60, 818 | 324, 273 |
| 16. ສ້າງຕັ້ງ ໂຮງຮຽນປະຖົມສຶກສາ, ມັດທະຍົມສຶກສາຕອນຕົ້ນ ແລະ ຕອນປາຍ ໃນບ່ອນທີ່ມີຄວາມ ຈໍາເປັນ ແລະ ສ້າງລະບົບໂຮງຮຽນສາມັນຂັ້ນພື້ນຖານຄົບຊຸດ ໂດຍການເພີ່ມຂັ້ນມັດທະຍົມສຶກສາຕອນຕົ້ນ ໃນໂຮງຮຽນປະຖົມສົມບູນທີ່ມີເງື່ອນໄຂ ເພື່ອຂະຫຍາຍໂອກາດ ການສຶກສາ ສໍາລັບນັກຮຽນໃນເຂດຊົນນະບົດຫ່າງໄກສອກຫຼີກ. ສ້າງ ຫຼື ປັບປຸງ ໂຮງຮຽນກິນນອນ ແລະ ຫໍພັກນັກຮຽນ ໃຫ້ມີຄວາມປອດໄພ, ຖືກສຸຂະລັກສະນະ ໃຫ້ນັກຮຽນພິການ ສາມາດເຂົ້າເຖິງ ແລະ ຕອບສະໜອງຕໍ່ຄວາມຮຽກຮ້ອງຕ້ອງການຂອງນັກຮຽນຍິງ ແລະ ນັກຮຽນທີ່ມາຈາກພື້ນຖານວັດທະນະທໍາທີ່ແຕກຕ່າງກັນ ເພື່ອອໍານວຍຄວາມສະດວກໃຫ້ແກ່ນັກຮຽນບ້ານໄກ ໄດ້ມາເຂົ້າຮຽນຊັ້ນມັດທະຍົມ. | 2011-2015 | 1.2 ຂະຫຍາຍໂອກາດ/ຫຼຸດຜ່ອນການຄ້າງຫ້ອງ-ປະລະ<br>1.4 ຂະຫຍາຍໂອກາດ/ໃຊ້ທຶນຕາມເປົ້າໝາຍ<br>1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>1.7 ຂະຫຍາຍໂອກາດ/ມັດທະຍົມ-ເຕັກນິກ ອາຊີວະ-ຂັ້ນສູງ | ກົມອະນຸບານ ແລະ ປະຖົມ ສຶກສາ, ກົມມັດທະຍົມສຶກສາ, ກົມການເງິນ, ກົມແຜນການ ແລະການຮ່ວມມື, ສູນການສຶກສາຮຽນຮ່ວມ, ຄະນະກໍາມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ, ຄະນະກໍາມາທິການເພື່ອແມ່ ແລະ ເດັກແຫ່ງຊາດ, ກະຊວງສາທາລະນະສຸກ | 904, 571 | 208, 818 | 1, 113, 390 |

| ໜ້າວຽກຫຼັກ | ໄລຍະ ປະຕິບັດ | ແຜນງານ/ໂຄງການຂອງແຜນ ພັດທະນາຂະແໜງການສຶກສາ 2011-2015 ທີ່ກ່ຽວຂ້ອງ[2] | ພາກສ່ວນ ຮັບຜິດຊອບ | ຄາດຄະເນງົບປະມານ (ລ້ານກີບ) | | |
|---|---|---|---|---|---|---|
| | | | | ຈາກລັດຖະບານ | ຈາກແຫຼ່ງອື່ນ | ລວມ |
| 17. ບັນຈຸຄູທີ່ມີ ປະສົບການສູງ ໃຫ້ ສິດສອນ ໃນຊັ້ນ ປ1-ປ3, ເຝິກອົບຮົມກ່ຽວກັບພັດທະນາການຂອງ ເດັກ ແລະ ວິທີການສິດສອນພາສາລາວເບື້ອງຕົ້ນ, ຮັບປະກັນ ໃຫ້ນັກຮຽນ ໄດ້ຮຽນເຕັມຊົ່ວໂມງ, ມີ ລະບົບການຊ່ວຍເຫຼືອເພີ່ມສຳລັບ ຜູ້ຮຽນອ່ອນ ແລະ ເອົາໃຈໃສ່ເປັນພິເສດ ຕໍ່ນັກຮຽນ ຍິງ, ນັກຮຽນພິການ ແລະ ນັກຮຽນຊົນເຜົ່າທີ່ເວົ້າພາສາ ລາວບໍ່ທັນໄດ້ໂດຍໃຫ້ປະຕິບັດອັດຕາສ່ວນນັກຮຽນ ຕໍ່ຄູ 25:1. | 2011-2015 | 1.2 ຂະຫຍາຍໂອກາດ/ຫຼຸດຜ່ອນການ ຄ້າງຫ້ອງ-ປະລະ<br>2.1 ຄຸນນະພາບ/ຫຼັກສູດ<br>2.2 ຄຸນນະພາບ/ສ້າງຄູ<br>2.3 ຄຸນນະພາບ/ບັນຈຸຄູ<br>2.4 ຄຸນນະພາບ/ສິ່ງຈູງໃຈຄູ | ກົມຈັດຕັ້ງແລະພະນັກງານ, ກົມສ້າງຄູ, ສະຖາບັນ ຄົ້ນຄ້ວາວິທະຍາສາດການສຶກສາ, ສະຖາບັນຄົ້ນ ຄ້ວາພາສາສາດ, ສູນການສຶກສາຮຽນຮ່ວມ | 158 | 37 | 195 |
| 18. ພັດທະນາການສຶກສາຮູບແບບຕ່າງໆ ເພື່ອສະໜອງການສຶກສາ ແລະ ລຶບລ້າງຄວາມບໍ່ຮູ້ ໜັງສື ສຳລັບ ເດັກຍິງ/ແມ່ຍິງ, ຊົນເຜົ່າ, ຄົນພິການ ແລະ ກຸ່ມດ້ອຍໂອກາດອື່ນໆ ທີ່ບໍ່ມີເງື່ອນໄຂເຂົ້າ ຮຽນໃນໂຮງຮຽນ ເຊັ່ນ: ການຮຽນດ້ວຍຕົນເອງ, ສູນ ການຮຽນຮູ້ຊຸມຊົນ, ການສຶກສາທາງໄກ, ແລະ ການສຶກສາທຽບເທົ່ານອກໂຮງຮຽນ ທີ່ມີຄຸນນະ ພາບ ເທົ່າທຽມກັນ. | 2011-2015 | 1.5 ຂະຫຍາຍໂອກາດ/ຮຽນຮ່ວມ | ກົມອະນຸບານ ແລະ ປະຖົມ ສຶກສາ, ກົມ ມັດທະຍົມສຶກສາ, ກົມການສຶກສາ ນອກໂຮງຮຽນ, ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ, ສູນ ການສຶກສາຮຽນຮ່ວມ | 812 | 188 | 1, 000 |
| 19. ດັດປັບປະຕິທິນການສຶກສາ ແລະ ຕາຕະລາງ ເວລາຮຽນ ໃຫ້ແທດເໝາະກັບຈຸດພິເສດ ວົງຈອນ ການຜະລິດ ຂອງທ້ອງຖິ່ນ ເພື່ອເພີ່ມອັດຕາການ ເຂົ້າຮຽນ ໂດຍຮັບປະກັນ ໃຫ້ສຳເລັດ ການສອນ-ການຮຽນ ຕາມຫຼັກສູດແຫ່ງຊາດ. | 2011-2015 | 1.5 ຂະຫຍາຍໂອກາດ/ຮຽນຮ່ວມ | ກົມອະນຸບານ ແລະ ປະຖົມ ສຶກສາ, ກົມ ມັດທະຍົມສຶກສາ, ພະແນກສຶກສາທິການ ແລະ ກິລາແຂວງ, ສູນການສຶກສາຮຽນຮ່ວມ | 84 | 20 | 104 |
| **ຍຸດທະສາດ ທີ 4: ສືບຕໍ່ປະຕິຮູບຫຼັກສູດ ແລະ ສະໜອງອຸປະກອນ ການຮຽນ-ການສອນ ສຳລັບການສຶກສາຮຽນຮ່ວມ ໃນທຸກຊັ້ນ-ທຸກສາຍ, ນັບແຕ່ຊັ້ນອະນຸບານສຶກສາເຖິງການສຶກສາຊັ້ນສູງ, ໃຫ້ແທດເໝາະກັບຄວາມຕ້ອງການພິເສດຂອງ ຜູ້ຮຽນທຸກຄົນ ໂດຍສະເພາະ ເດັກຍິງ/ແມ່ຍິງ, ຜູ້ທີ່ຢູ່ໃນເຂດຊົນນະບົດຫ່າງໄກ ສອກຫຼີກ, ຊົນເຜົ່າ, ຄົນພິການ ແລະ ຜູ້ທີ່ມາຈາກກຸ່ມດ້ອຍໂອກາດອື່ນໆ. ປັບປຸງຫຼັກສູດ ສ້າງຄູ ແລະ ເຝິກອົບຮົມຄູ ເພື່ອປູກຈິດສຳນຶກ, ສ້າງທັດສະນະຄະຕິ ແລະ ທັກສະຕ່າງໆເພື່ອສະໜັບສະໜູນ ການສຶກສາຮຽນຮ່ວມ.** | | | | | | |
| | | | **ລວມງົບປະມານ ສຳລັບ ຍຸດທະສາດ ທີ 4** | **4, 057** | **937** | **4, 994** |

| ໜ້າວຽກຫຼັກ | ໄລຍະ ປະຕິບັດ | ແຜນງານ/ໂຄງການຂອງແຜນ ພັດທະນາຂະແໜງການສຶກສາ 2011-2015 ທີ່ກ່ຽວຂ້ອງ[2] | ພາກສ່ວນ ຮັບຜິດຊອບ | ຄາດຄະເນງົບປະມານ (ລ້ານກີບ) | | |
|---|---|---|---|---|---|---|
| | | | | ຈາກລັດຖະບານ | ຈາກແຫຼ່ງອື່ນ | ລວມ |
| 20. ເຊື່ອມສານແນວຄວາມຄິດການສຶກສາຮຽນຮ່ວມ ເຂົ້າໃນຂະບວນການພັດທະນາຫຼັກສູດ, ສື່ການ ຮຽນ-ການສອນ ໃນທຸກລະດັບໃຫ້ແທດເໝາະກັບ ຄວາມຕ້ອງການພິເສດຂອງຜູ້ຮຽນທຸກຄົນ. ເຝິກອົບຮົມ ຜູ້ພັດທະນາ ຫຼັກສູດ ແລະ ປຶ້ມແບບຮຽນ, ສະໜອງສື່ການຮຽນ-ການສອນ ທີ່ເນັ້ນໜັກເນື້ອໃນ ການຮຽນຮ່ວມໃຫ້ຫຼາຍຂື້ນ ໂດຍສະເພາະ ກ່ຽວກັບສິດທິມະນຸດ, ສິດທິເດັກ, ຄວາມສະເໝີພາບ ຍິງ-ຊາຍ, ຄວາມຫຼາກຫຼາຍ ແລະ ອຸດົມຮັ່ງມີທາງວັດທະນະທຳ ຂອງບັນດາເຜົ່າ ແລະ ການຍອມຮັບຄວາມສາມາດທີ່ແຕກ ຕ່າງກັນຂອງຄົນໃນສັງຄົມ. | 2011-2015 | 2.1 ຄຸນນະພາບ/ຫຼັກສູດ<br>2.2 ຄຸນນະພາບ/ສ້າງຄູ | ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ, ສູນ ການສຶກສາຮຽນຮ່ວມ, ກົມວິຊາການ, ສະມາຄົມ ຄົນພິການ, ສູນກາງສະຫະພັນແມ່ຍິງ, ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງ | 422 | 98 | 520 |
| 21. ປັບປຸງ ເນື້ອໃນຫຼັກສູດຂອງທຸກວິຊາ ໃຫ້ເຂົ້າໃຈ ງ່າຍ ແລະ ສາມາດປັບປ່ຽນໃຫ້ແທດເໝາະກັບ ຄວາມຕ້ອງການ ແລະ ຄວາມສາມາດ ຂອງຜູ້ຮຽນທຸກຄົນ. | 2011-2015 | 2.1 ຄຸນນະພາບ/ຫຼັກສູດ | ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ, ກົມພະລະ ແລະ ສິລະປະສຶກສາ, ກົມວິຊາການ, ສູນການສຶກສາຮຽນຮ່ວມ, ຄະນະກຳມະການ ກິລາ-ກາຍະກຳແຫ່ງຊາດ, ສູນພັດທະນາຄູ ແລະ ສະຖາບັນສ້າງຄູ, ແລະ ພາກສ່ວນອື່ນໆ ທີ່ ກ່ຽວຂ້ອງ | 211 | 49 | 260 |
| 22. ເຝິກອົບຮົມຄູ ເພື່ອສ້າງຄວາມຮູ້ ຄວາມເຂົ້າໃຈ ກ່ຽວກັບສິດທິພື້ນຖານຂອງຜູ້ຮຽນ, ພັດທະນາການ ຂອງຜູ້ຮຽນແຕ່ລະຊ່ຳອາຍຸ, ການຈັດການຮຽນ -ການສອນ ຫ້ອງຮຽນທີ່ມີຄວາມຫຼາກ ຫຼາຍ, ວິທີການຊອກຮູ້ຈຸດພິເສດ ແລະ ບັນດາປັດໄຈທີ່ມີ ຜົນກະທົບຕໍ່ການຮຽນຮູ້ຂອງຜູ້ຮຽນ, ວິທີການ ສິດສອນ ແລະ ຊ່ວຍເຫຼືອທີ່ແທດເໝາະ ໂດຍສະ ເພາະ ສຳລັບຜູ້ດ້ອຍໂອກາດ ເພື່ອຫຼຸດຜ່ອນອັດຕາການຄ້າງຫ້ອງ ແລະ ປະລະການຮຽນ. | 2011-2015 | 2.2 ຄຸນນະພາບ/ສ້າງຄູ | ກົມສ້າງຄູ, ຄະນະສຶກສາສາດໃນມະຫາວິທະຍາ ໄລທຸກແຫ່ງ, ສູນພັດທະນາຄູ ແລະ ສະຖາບັນສ້າງ ຄູ, ກົມວິຊາການທີ່ກ່ຽວຂ້ອງ, ສະຖາບັນຄົ້ນຄ້ວາພາສາສາດ, ສູນການສຶກສາ ຮຽນຮ່ວມ | 1, 180 | 272 | 1, 452 |

| ໜ້າວຽກຫຼັກ | ໄລຍະ ປະຕິບັດ | ແຜນງານ/ໂຄງການຂອງແຜນ ພັດທະນາຂະແໜງການສຶກສາ 2011-2015 ທີ່ກ່ຽວຂ້ອງ[2] | ພາກສ່ວນ ຮັບຜິດຊອບ | ຄາດຄະເນງົບປະມານ (ລ້ານກີບ) | | |
|---|---|---|---|---|---|---|
| | | | | ຈາກລັດຖະບານ | ຈາກແຫຼ່ງອື່ນ | ລວມ |
| 23. ປັບປຸງວິທີການຮຽນ-ການສອນ ພາສາລາວໃຫ້ແກ່ຜູ້ຮຽນຊົນເຜົ່າ ໃຫ້ມີປະສິດ ທິພາບ, ເຊັ່ນ: ສອນພາສາລາວແບບເລັ່ງລັດ ເພື່ອກຽມຄວາມພ້ອມໃຫ້ແກ່ເດັກຊົນເຜົ່າ ກ່ອນເຂົ້າຮຽນຊັ້ນປະຖົມ. ນຳໃຊ້ພາສາເວົ້າ ແລະ ວັດທະນາທຳເຜົ່າ ເພື່ອຊ່ວຍອະທິບາຍເນື້ອໃນບົດຮຽນ ແລະປັບປຸງການຮຽນ. ພັດທະນາປຶ້ມຄູ່ມືສິນທະນາພາສາລາວ ແລະ ສື່ການຮຽນ-ການສອນ ພາສາລາວ ສຳລັບນັກຮຽນຊົນເຜົ່າ ຊັ້ນ ປ1-ປ3, ບຳລຸງພາສາລາວໃຫ້ເດັກຊົນເຜົ່າຊັ້ນ ປ1- ປ3, ບຳລຸງພາສາເຜົ່າ ຂັ້ນພື້ນຖານແບບເລັ່ງລັດ ໃຫ້ແກ່ຄູທີ່ ຈະໄປສອນ ໃນເຂດຊົນເຜົ່າ ຕາມຄວາມຈຳເປັນ ແລະເໝາະສົມ, | 2012-2015 | 1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>2.1 ຄຸນນະພາບ/ຫຼັກສູດ<br>2.2 ຄຸນນະພາບ/ສ້າງຄູ<br>2.3 ຄຸນນະພາບ/ບັນຈຸຄູ<br>2.4 ຄຸນນະພາບ/ສິ່ງຈູງໃຈຄູ | ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ, ກົມອະນຸບານ ແລະ ປະຖົມ ສຶກສາ, ກົມສ້າງຄູ, ສູນພັດທະນາຄູ ແລະ ສະຖາບັນສ້າງຄູ, ຄະນະສຶກສາສາດໃນມະຫາວິທະຍາໄລທຸກແຫ່ງ, ສະຖາບັນຄົ້ນຄ້ວາພາສາສາດ, ກົມຈັດຕັ້ງແລະພະນັກງານ, ສູນການສຶກສາຮຽນຮ່ວມ | 741 | 171 | 912 |
| 24. ພັດທະນາເນື້ອໃນຫຼັກສູດທ້ອງຖິ່ນ ແລະ ສື່ການຮຽນ-ການສອນ ໃຫ້ສອດຄ່ອງ ແລະ ແທດເໝາະກັບຄວາມຕ້ອງການ ຂອງຜູ້ຮຽນໂດຍເນັ້ນໜັກ ທັກສະທີ່ເປັນ ປະໂຫຍດແກ່ການດຳລົງຊີວິດ, ການປະກອບອາຊີບ, ລວມທັງພາສາ ແລະ ວັດທະນະທຳທ້ອງຖິ່ນ. | 2011-2015 | 2.1 ຄຸນນະພາບ/ຫຼັກສູດ | ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ, ກົມພະລະ ແລະ ສິລະປະ ສຶກສາ, ກົມການສຶກສານອກໂຮງຮຽນ, ກົມສ້າງຄູ, ຄະນະ ສຶກສາສາດໃນມະຫາ ວິທະຍາ ໄລທຸກແຫ່ງ, ສະຖາບັນສ້າງຄູ ແລະ ສູນພັດທະນາຄູ, ພະແນກ ສຶກສາທິການແຂວງ, ຫ້ອງການ ສຶກສາ ທິການເມືອງ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຄະນະ ພັດທະນາການສຶກສາຂັ້ນຕ່າງໆ, ສູນການສຶກສາຮຽນຮ່ວມ | 211 | 49 | 260 |

| **ໜ້າວຽກຫຼັກ** | **ໄລຍະ ປະຕິບັດ** | **ແຜນງານ/ໂຄງການຂອງແຜນ ພັດທະນາຂະແໜງການສຶກສາ 2011-2015 ທີ່ກ່ຽວຂ້ອງ[2]** | **ພາກສ່ວນ ຮັບຜິດຊອບ** | **ຄາດຄະເນງົບປະມານ (ລ້ານກີບ)** | | |
|---|---|---|---|---|---|---|
| | | | | **ຈາກລັດຖະບານ** | **ຈາກແຫຼ່ງອື່ນ** | **ລວມ** |
| 25. ປັບປຸງ, ຂະຫຍາຍ ແລະ ປະຕິບັດການເລື່ອນຂັ້ນແບບຕໍ່ເນື່ອງຄຽງຄູ່ກັບການ ພັດທະນາລະບົບການຊ່ວຍເຫຼືອສຳລັບຜູ້ຮຽນອ່ອນ. ນຳເອົາວິທີ ການວັດຜົນຕໍ່ເນື່ອງເຂົ້າໃນຫຼັກສູດການສ້າງຄູ. | 2011-2015 | 1.2 ຂະຫຍາຍໂອກາດ/ຫຼຸດຜ່ອນການຄ້າງຫ້ອງ-ປະລະ | ກົມອະນຸບານ ແລະ ປະຖົມ ສຶກສາ, ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ, ກົມສ້າງຄູ, ຄະນະສຶກສາສາດໃນມະຫາ ວິທະຍາໄລທຸກແຫ່ງ, ສະຖາບັນສ້າງຄູ ແລະ ສູນພັດທະນາຄູ | 1, 292 | 298 | 1, 590 |
| **ຍຸດທະສາດ ທີ 5: ຮັບປະກັນໃຫ້ ສະຖານທີ່ການສຶກສາ ທຸກຂັ້ນ-ທຸກສາຍ ນັບແຕ່ຂັ້ນອະນຸບານສຶກສາເຖິງການສຶກສາ ຊັ້ນສູງ ແລະ ຫໍພັກຕ່າງໆ ເປັນບ່ອນທີ່ມີສຸຂະອະນາໄມ ແລະ ມີການປົກປ້ອງທີ່ດີ ສຳລັບເພດຍິງ, ຊົນເຜົ່າ, ຄົນພິການ ແລະ ກຸ່ມດ້ອຍໂອກາດ ປະເພດຕ່າງໆ. ສ້າງເງື່ອນໄຂທາງດ້ານວັດຖຸ ແລະ ຈິດໃຈ, ສົ່ງເສີມສຸຂະພາບ ແລະ ໂພຊະນາການ, ເປັນຕົ້ນ ສະໜອງອາຫານ, ທາດບຳລຸງ ແລະ ບໍລິການສາທາລະນະສຸກຕ່າງໆ ໃນເຂດທີ່ມີ ຄວາມຈຳເປັນ ເພື່ອໃຫ້ຄູ ແລະ ນັກຮຽນມີສຸຂະພາບກາຍ ແລະ ສຸຂະພາບຈິດທີ່ດີ.** | | | | | | |
| | | | **ລວມງົບປະມານ ສຳລັບ ຍຸດທະສາດ ທີ 5** | **1, 108, 905** | **255, 988** | **1, 364, 893** |
| 26. ສືບຕໍ່ພັດທະນາ ແລະ ເສີມຂະຫຍາຍແນວຄວາມຄິດຂອງໂຮງຮຽນຄຸນນະພາບເຂົ້າໃນທຸກຂັ້ນ-ທຸກສາຍ ຂອງການສຶກສາ; ໃຫ້ການສະໜັບສະໜູນ ທີ່ແທດເໝາະໃຫ້ແກ່ສະຖານທີ່ການສຶກສາ ເພື່ອ ປະເມີນ ແລະ ຕອບສະໜອງ ຄວາມຕ້ອງການພິເສດຂອງຜູ້ຮຽນ ແລະປະເມີນຕົນເອງ ກ່ຽວກັບ ຈັນຍາບັນຂອງຄູທີ່ມີຕໍ່ການຮຽນຮ່ວມ. | 2011-2015 | 1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>2.5 ຄຸນນະພາບ/ຜົນງານ ໂຮງຮຽນ-ນັກຮຽນ | ກົມວິຊາການທີ່ກ່ຽວຂ້ອງ, ສູນຮັບປະກັນຄຸນນະພາບ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງສາທາລະນະສຸກ, ສູນການສຶກສາຮຽນຮ່ວມ | 2, 801 | 647 | 3, 448 |
| 27. ປັບປຸງລະບຽບການຄຸ້ມຄອງສະຖານທີ່ການສຶກສາເພື່ອຮັບປະກັນຄວາມປອດໄພ, ປົກປ້ອງກຸ່ມດ້ອຍໂອກາດ, ຫຼຸດຜ່ອນຄວາມສ່ຽງ ແລະ ປະກົດການຫຍໍ້ທໍ້, ລຶບລ້າງການ ຈຳແນກ ແລະ ຢຸດຕິການກະທຳຮຸນແຮງຕໍ່ເພດຍິງ, ຊົນເຜົ່າ ແລະ ຄົນພິການ, ສົ່ງເສີມຄວາມສະເໝີພາບ, ຄວາມສາມັກຄີປອງດອງ, ອະນຸລັກວັດທະນະທຳ, ຍອມຮັບຄວາມແຕກຕ່າງຫຼາກຫຼາຍຂອງຜູ້ຮຽນ. | 2011-2015 | 1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>2.5 ຄຸນນະພາບ/ຜົນງານ ໂຮງຮຽນ-ນັກຮຽນ<br>3.2 ບໍລິຫານຄຸ້ມຄອງ/ເມືອງ-ໂຮງຮຽນ | ກົມຈັດຕັ້ງແລະພະນັກງານ, ກົມກວດກາ, ກົມວິຊາການທີ່ກ່ຽວຂ້ອງ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງສາທາລະນະສຸກ, ອົງການປົກຄອງທ້ອງຖິ່ນ, ສູນການສຶກສາຮຽນຮ່ວມ, ສະມາຄົມຄົນພິການ | 158 | 37 | 195 |

| ໜ້າວຽກຫຼັກ | ໄລຍະ ປະຕິບັດ | ແຜນງານ/ໂຄງການຂອງແຜນ ພັດທະນາຂະແໜງການສຶກສາ 2011-2015 ທີ່ກ່ຽວຂ້ອງ[2] | ພາກສ່ວນ ຮັບຜິດຊອບ | ຄາດຄະເນງົບປະມານ (ລ້ານກີບ) | | |
|---|---|---|---|---|---|---|
| | | | | ຈາກລັດຖະບານ | ຈາກແຫຼ່ງອື່ນ | ລວມ |
| 28. ຮັບປະກັນການປຸກສ້າງ ອາຄານສະຖານທີ່ການສຶກສາ, ໂຮງຮຽນກິນນອນ, ຫໍພັກ ແລະ ຫ້ອງນ້ຳຕ່າງໆ ເພື່ອອຳນວຍຄວາມສະດວກໃຫ້ຜູ້ພິການສາມາດເຂົ້າເຖິງ ໂດຍປະຕິບັດຕາມມາດຕະຖານທີ່ກະຊວງສຶກສາທິການກຳນົດ | 2011-2015 | 1.4 ຂະຫຍາຍໂອກາດ/ນຳໃຊ້ທຶນຕາມເປົ້າໝາຍ<br>1.5 ຂະຫຍາຍໂອກາດ/ຮຽນຮ່ວມ | ກົມການເງິນ, ກົມຈັດຕັ້ງ, ແລະພະນັກງານ, ກົມກວດກາ, ອົງການປົກຄອງທ້ອງຖິ່ນ, ສູນການສຶກສາຮຽນຮ່ວມ | 742, 539 | 171, 414 | 913, 953 |
| 29. ອົບຮົມ ຜູ້ບໍລິຫານການສຶກສາ, ຄູ, ນັກຮຽນ ແລະ ຊຸມຊົນ ກ່ຽວກັບວິທີການປະເມີນຄວາມສ່ຽງ, ການສ້າງແຜນປ້ອງກັນ, ຫຼຸດຜ່ອນ ແລະ ຮັບມືກັບໄພພິບັດ. | 2011-2015 | 2.1 ຄຸນນະພາບ/ຫຼັກສູດ<br>3.2 ບໍລິຫານຄຸ້ມຄອງ/ເມືອງ-ໂຮງຮຽນ | ກົມຈັດຕັ້ງ ແລະ ພະນັກງານ, ກົມວິຊາການ, ສະຖາບັນຄົ້ນຄ້ວາ ວິທະຍາສາດການສຶກສາ, ຫ້ອງການກະຊວງສຶກສາທິການ, ອົງການຄຸ້ມຄອງ ແລະ ຕ້ານໄພພິບັດແຫ່ງຊາດ | 454 | 105 | 559 |
| 30. ຈັດຕັ້ງປະຕິບັດ, ຕິດຕາມ ແລະ ປະເມີນຜົນ ນະໂຍບາຍແຫ່ງຊາດວ່າດ້ວຍວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ, ເຊັ່ນ: ການສະໜອງອາຫານໃນໂຮງຮຽນ, ການສັກຢາກັນພະຍາດ, ເສີມວິຕາມິນ ແລະ ໃຫ້ຢາຂ້າແມ່ທ້ອງ, ການສົ່ງເສີມໂຮງຮຽນໃຫ້ເປັນເຈົ້າການ ຕໍ່ວຽກງານອະນາໄມ ສິ່ງແວດລ້ອມ ແບບຮອບດ້ານ, ຮັບປະກັນໃຫ້ມີການສະໜອງນ້ຳສະອາດ, ວິດຖ່າຍ, ການກຳຈັດຂີ້ເຫຍື້ອ ແລະ ອື່ນໆອົບຮົມຄູກ່ຽວກັບການຊອກຮູ້ບັນຫາກ່ຽວກັບສຸຂະພາບ ແລະ ສຳຫຼວດໂພຊະນາການຂອງນັກຮຽນທຸກຄົນ. | 2011-2015 | 1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>2.1 ຄຸນນະພາບ/ຫຼັກສູດ<br>2.5 ຄຸນນະພາບ/ຜົນງານໂຮງຮຽນ-ນັກຮຽນ | ສູນວິໄຈຍຸດທະສາດແລະ ຄົ້ນຄ້ວາ ການສຶກສາ, ສູນຮຽນຮ່ວມ,ກົມວິຊາການທີ່ກ່ຽວຂ້ອງ, ຫ້ອງການກະຊວງສຶກສາທິການ ແລະກິລາ, ກະຊວງສາທາລະນະສຸກ, ກົມກວດກາ | 362, 545 | 83, 693 | 446, 238 |
| 31. ປະຕິບັດຫຼັກສູດ, ກິດຈະກຳນອກຫຼັກສູດ ແລະ ສະໜອງ ສື່ການຮຽນ-ການສອນ ທັກສະຊີວິດ ກ່ຽວກັບ ສຸຂະພາບຈະເລີນພັນ, ການປ້ອງກັນໂລກເອດ ແລະ ພະຍາດຕິດຕໍ່ທາງເພດສຳພັນ, ໂພຊະນາການ, ສຸຂະສຶກສາ, ການປ້ອງກັນອັນຕະລາຍຈາກລະເບີດທີ່ບໍ່ທັນແຕກ, ການປ້ອງກັນອຸບັດຕິເຫດຕາມທ້ອງຖະໜົນ, ການປ້ອງກັນໄພພິບັດ ແລະ ອື່ນໆ. | 2011-2015 | 1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>2.1 ຄຸນນະພາບ/ຫຼັກສູດ | ກົມອະນຸບານ ແລະ ປະຖົມ ສຶກສາ, ກົມມັດທະຍົມສຶກສາ, ກົມສ້າງຄູ, ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ, ກະຊວງສາທາລະນະສຸກ, ກະຊວງປ້ອງກັນຄວາມສະຫງົບ, ຜູ້ຕິດເຊື້ອ HIV/AIDS ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງ | 406 | 94 | 500 |

| ໜ້າວຽກຫຼັກ | ໄລຍະ ປະຕິບັດ | ແຜນງານ/ໂຄງການຂອງແຜນພັດທະນາຂະແໜງການສຶກສາ 2011-2015 ທີ່ກ່ຽວຂ້ອງ[2] | ພາກສ່ວນ ຮັບຜິດຊອບ | ຄາດຄະເນງົບປະມານ (ລ້ານກີບ) | | |
|---|---|---|---|---|---|---|
| | | | | ຈາກລັດຖະບານ | ຈາກແຫຼ່ງອື່ນ | ລວມ |
| **ຍຸດທະສາດ ທີ 6: ຮັບປະກັນການສະໜອງອາຄານສະຖານທີ່ ແລະ ການບໍລິການທີ່ແທດເໝາະ ໃຫ້ແກ່ນັກຮຽນພິການ ໂດຍການຊ່ວຍເຫຼືອທາງດ້ານວິຊາການ ແລະ ອຸປະກອນຊ່ວຍສ່ວນບຸກຄົນ ເພື່ອໃຫ້ສາມາດເຂົ້າຮຽນຮ່ວມໃນສະຖານທີ່ການສຶກສາທົ່ວໄປ. ໃນກໍລະນີທີ່ຄົນພິການໜັກ ບໍ່ສາມາດເຂົ້າຮຽນຮ່ວມໄດ້ ຈຶ່ງ ສະໜອງໂຮງຮຽນ ແລະ ສູນການສຶກສາພິເສດ.** | | | | | | |
| | | | **ລວມງົບປະມານ ສຳລັບ ຍຸດທະສາດ ທີ 6** | **111, 929** | **25, 838** | **137, 767** |
| 32. ກຳນົດ ແລະ ທົບທວນ ມາດຕະຖານ ການປຸກສ້າງໂຮງຮຽນທີ່ຈຳເປັນ ເພື່ອອຳນວຍຄວາມສະດວກໃຫ້ແກ່ນັກຮຽນພິການ ສາມາດເຂົ້າເຖິງສະຖານທີ່ການສຶກສາ ລວມທັງທາງຍ່າງ, ຫໍພັກ, ຫ້ອງນ້ຳ ແລະ ອື່ນໆ. | 2012-2015 | 1.4 ຂະຫຍາຍໂອກາດ/ນຳໃຊ້ທຶນຕາມເປົ້າໝາຍ<br>1.5 ຂະຫຍາຍໂອກາດ/ຮຽນຮ່ວມ | ກົມການເງິນ, ກົມວິຊາການທີ່ກ່ຽວຂ້ອງ, ກົມກວດກາ, ສະຖາບັນການສຶກສາທຸກຂັ້ນ-ທຸກສາຍ, ສູນການສຶກສາຮຽນຮ່ວມ, ກະຊວງໂຍທາທິການ ແລະ ຂົນສົ່ງ, ສະມາຄົມຄົນພິການ | (ເບິ່ງຂໍ້ 30) | (ເບິ່ງຂໍ້ 30) | (ເບິ່ງຂໍ້ 30) |
| 33. ປັບປຸງວິທີການສິດສອນ, ພັດທະນາ ຫຼັກສູດແລະສື່ການຮຽນ-ການສອນ ໃນທຸກຂັ້ນ-ທຸກສາຍ ໃຫ້ແທດເໝາະ ກັບຄວາມຕ້ອງການພິເສດຂອງຄົນພິການທາງດ້ານຮ່າງກາຍ, ມັນສະໝອງ ແລະ ພັດທະນາການ ເຊັ່ນ: ການນຳໃຊ້ອັກສອນນູນ, ການບັນທຶກສຽງ, ພາສາມື ແລະ ອື່ນໆ. ພັດທະນາພາສາມື ແລະ ປຶ້ມແບບຮຽນອັກສອນນູນ ເພື່ອຖ່າຍທອດເນື້ອໃນຫຼັກ ຂອງວິຊາຕ່າງໆ ໃນທຸກລະດັບຂອງການສຶກສາ. | 2012-2015 | 2.1 ຄຸນນະພາບ/ຫຼັກສູດ<br>2.2 ຄຸນນະພາບ/ສ້າງຄູ | ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ, ກົມສ້າງຄູ, ກົມວິຊາການ, ມະຫາວິທະຍາໄລແຫ່ງຊາດ, ໂຮງຮຽນພິເສດ/ກະຊວງສາທາລະນະສຸກ, ສູນການສຶກສາຮຽນຮ່ວມ, ສະມາຄົມຄົນພິການ | 845 | 195 | 1, 040 |
| 34. ສ້າງລະບົບການເກັບກຳຂໍ້ມູນກ່ຽວກັບຄວາມຕ້ອງການຂອງເດັກພິເສດ ໃນໂຮງຮຽນລວມທັງການ ກວດຫາຄວາມເປັນພິການໃຫ້ໄດ້ແຕ່ທີ່ວທີ ແລະນຳສົ່ງໄປຍັງສະຖານບໍລິການສາທາລະນະສຸກທີ່ເໝາະສົມ. | 2012-2015 | 1.5 ຂະຫຍາຍໂອກາດ/ຮຽນຮ່ວມ | ສະຖາບັນການສຶກສາ, ກົມວິຊາການທີ່ກ່ຽວຂ້ອງ, ກະຊວງສາທາລະນະສຸກ, ສູນການສຶກສາຮຽນຮ່ວມ, ສະມາຄົມຄົນພິການ | 106 | 24 | 130 |
| 35. ສະໜອງອຸປະກອນພິເສດໃຫ້ແກ່ສະຖາບັນການສຶກສາຕ່າງໆ ເຊັ່ນ: ອຸປະກອນວັດແທກສາຍຕາ, ວັດແທກລະດັບການໄດ້ຍິນ, ເຄື່ອງພິມອັກສອນນູນ ແລະ ອຸປະກອນຊ່ວຍສ່ວນບຸກຄົນ ສຳລັບນັກຮຽນພິການ. | 2012-2015 | 1.5 ຂະຫຍາຍໂອກາດ/ຮຽນຮ່ວມ | ກົມການເງິນ, ສູນຮຽນຮ່ວມ, ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | 98, 835 | 22, 816 | 121, 651 |

| ໜ້າວຽກຫຼັກ | ໄລຍະ ປະຕິບັດ | ແຜນງານ/ໂຄງການຂອງແຜນ ພັດທະນາຂະແໜງການສຶກສາ 2011-2015 ທີ່ກ່ຽວຂ້ອງ[2] | ພາກສ່ວນ ຮັບຜິດຊອບ | ຄາດຄະເນງົບປະມານ (ລ້ານກີບ) | | |
|---|---|---|---|---|---|---|
| | | | | ຈາກລັດຖະບານ | ຈາກແຫຼ່ງອື່ນ | ລວມ |
| 36. ສ້າງ ໂຮງຮຽນ ແລະ ສູນການສຶກສາພິເສດໃນບ່ອນທີ່ມີຄວາມຈຳເປັນ ສຳລັບ ຜູ້ພິການໜັກ-ພິການຊ້ຳຊ້ອນ ແລະ ເພື່ອກະກຽມ ໃຫ້ເຂົາເຈົ້າສາມາດເຂົ້າຮຽນໃນລະບົບການສຶກສາທົ່ວໄປ. | 2012-2015 | 1.4 ຂະຫຍາຍໂອກາດ/ນຳໃຊ້ທຶນຕາມເປົ້າໝາຍ<br>1.5 ຂະຫຍາຍໂອກາດ/ຮຽນຮ່ວມ | ກົມການເງິນ, ສູນການສຶກສາຮຽນຮ່ວມ, ກະຊວງສາທາລະນະສຸກ, ຄະນະກຳມະການແຫ່ງຊາດເພື່ອຄົນພິການ, ສະມາຄົມຄົນພິການ | 3, 461 | 799 | 4, 260 |
| 37. ສ້າງ ແລະ ບຳລຸງຄູເພື່ອໃຫ້ສາມາດສິດສອນຜູ້ຮຽນພິການ ໃນໂຮງຮຽນທົ່ວໄປ ແລະ ສ້າງຄູຊ່ຽວຊານ ສຳລັບການສຶກສາພິເສດ. | 2012-2015 | 2.2 ຄຸນນະພາບ/ສ້າງຄູ | ກົມສ້າງຄູ, ມະຫາວິທະຍາໄລ, ກົມວິຊາການທີ່ກ່ຽວຂ້ອງ, ສູນການສຶກສາຮຽນຮ່ວມ, ສະມາຄົມຄົນພິການ | 8, 154 | 1, 882 | 10, 036 |
| 38. ນຳໃຊ້ສູນຊັບພະຍາກອນ, ໂຮງຮຽນພິເສດ ແລະ ຄູຊ່ຽວຊານການສຶກສາພິເສດ ເພື່ອ ຊ່ວຍເຫຼືອ ຄູທີ່ສອນເດັກພິການໃນໂຮງຮຽນທົ່ວໄປ. | 2012-2015 | 2.2 ຄຸນນະພາບ/ສ້າງຄູ | ສູນການສຶກສາຮຽນຮ່ວມ, ກົມສ້າງຄູ, ມະຫາວິທະຍາໄລ, ກົມວິຊາການທີ່ກ່ຽວຂ້ອງ, ສູນຊັບພະຍາ ກອນ, ໂຮງຮຽນພິເສດ, ສະມາຄົມຄົນພິການ | 528 | 122 | 650 |
| **ຍຸດທະສາດ ທີ 7: ສົ່ງເສີມການບັນຈຸສັບຊ້ອນຄູສອນໃຫ້ແທດເໝາະກັບການຮຽນຮ່ວມ ໂດຍຮັບປະກັນໃຫ້ແມ່ຍິງ, ຊົນເຜົ່າ ແລະ ຄົນພິການ ໄດ້ຮັບການບັນຈຸເຂົ້າເປັນລັດຖະກອນ ແລະ ຄູສອນ ນັບມື້ນັບຫຼາຍຂຶ້ນ. ສ້າງ, ບຳລຸງ ຍົກລະດັບ ແລະ ໃຫ້ການຊ່ວຍເຫຼືອດ້ານວິຊາການໃຫ້ແກ່ຄູສອນ ໃນສະຖານທີ່ການສຶກສາທຸກລະດັບ, ຜູ້ບໍລິຫານການສຶກສາ, ຄູສຶກສານິເທດ ແລະ ພະນັກງານ ໃນການປະຕິບັດວຽກງານການສຶກສາ ຮຽນຮ່ວມ. ເສີມສ້າງລະບົບການເກັບກຳແລະວິເຄາະຂໍ້ມູນກ່ຽວກັບບັນດາປັດໄຈ ທີ່ກີດກັ້ນການເຂົ້າເຖິງການສຶກສາ ແລະ ນຳໃຊ້ຂໍ້ມູນດັ່ງກ່າວເພື່ອປັບປຸງການວາງແຜນ, ຕິດຕາມ ແລະ ປະເມີນຜົນ ການປະຕິບັດ ການສຶກສາຮຽນຮ່ວມ.** | | | | | | |
| | | | **ລວມງົບປະມານ ສຳລັບ ຍຸດທະສາດ ທີ 7** | **26, 328** | **6, 078** | **32, 406** |
| 39. ບັນຈຸ, ສັບຊ້ອນຄູ ແລະ ບຸກຄະລາກອນ ເພດຍິງ, ຊົນເຜົ່າ ແລະ ຄົນພິການ ຕາມມາດຕະຖານທີ່ກຳນົດ ໃຫ້ເທົ່າທຽມ ແລະ ທົ່ວເຖິງ ແລະພັດທະນາຄວາມສາມາດໃຫ້ເຂົາເຈົ້າ. | 2012-2015 | 2.2 ຄຸນນະພາບ/ສ້າງຄູ<br>2.3 ຄຸນນະພາບ/ບັນຈຸຄູ<br>2.4 ຄຸນນະພາບ/ສິ່ງຈູງໃຈຄູ | ກົມຈັດຕັ້ງແລະພະນັກງານ, ກົມສ້າງຄູ, ກົມການສຶກສາ ຊັ້ນສູງ, ກົມອາຊີວະສຶກສາ, ມະຫາວິທະຍາໄລແຫ່ງຕ່າງໆ, ສູນການສຶກສາຮຽນຮ່ວມ, ກະຊວງພາຍໃນ, ພະແນກສຶກສາທິການ ແລະກິລາແຂວງ, ຫ້ອງການສຶກສາທິການເມືອງ ແລະກິລາ, ອົງການປົກຄອງທ້ອງຖິ່ນ, ສະມາຄົມຄົນພິການ, ສະຫະພັນແມ່ຍິງ | | | |

| ໜ້າວຽກຫຼັກ | ໄລຍະ ປະຕິບັດ | ແຜນງານ/ໂຄງການຂອງແຜນ ພັດທະນາຂະແໜງການສຶກສາ 2011-2015 ທີ່ກ່ຽວຂ້ອງ[2] | ພາກສ່ວນ ຮັບຜິດຊອບ | ຄາດຄະເນງົບປະມານ (ລ້ານກີບ) | | |
|---|---|---|---|---|---|---|
| | | | | ຈາກລັດຖະບານ | ຈາກແຫຼ່ງອື່ນ | ລວມ |
| 40. ສ້າງ, ບັນຈຸ-ສັບຊ້ອນ ຄູທີ່ມີຄຸນນະພາບ, ໃຫ້ການຊ່ວຍເຫຼືອ, ສະໜອງສິ່ງຈູງໃຈ ແລະ ປະຕິບັດນະໂຍບາຍ ເພື່ອຊຸກຍູ້ຄູໂດຍສະເພາະຄູເພດຍິງ ຊົນເຜົ່າ ໃຫ້ກັບໄປສິດສອນໃນ ທ້ອງຖິ່ນຂອງຕົນ. | 2012-2015 | 2.2 ຄຸນນະພາບ/ສ້າງຄູ<br>2.3 ຄຸນນະພາບ/ບັນຈຸຄູ<br>2.4 ຄຸນນະພາບ/ສິ່ງຈູງໃຈຄູ | ກົມຈັດຕັ້ງແລະພະນັກງານກົມສ້າງຄູ, ສູນການສຶກສາຮຽນຮ່ວມ, ກະຊວງພາຍໃນ, ພະແນກສຶກສາທິການ ແລະກິລາແຂວງ, ຫ້ອງການສຶກສາທິການ ແລະກິລາເມືອງ | (ເບິ່ງຂໍ້ 16) | (ເບິ່ງຂໍ້ 16) | (ເບິ່ງຂໍ້ 16) |
| 41. ນຳໃຊ້ອາສາສະໝັກທີ່ເປັນນັກຮຽນ ທີ່ຮຽນ ຈົບຊັ້ນມັດທະຍົມ, ນັກຮຽນສ້າງຄູ ແລະ ນັກສຶກສາມະຫາວິທະຍາໄລ, ທັງຍິງ ແລະ ຊາຍ ເພື່ອເປັນຜູ້ຊ່ວຍຄູສອນ ໃນເຂດທີ່ມີຄວາມຈຳເປັນ. | 2012-2015 | 2.2 ຄຸນນະພາບ/ສ້າງຄູ<br>2.3 ຄຸນນະພາບ/ບັນຈຸຄູ<br>2.4 ຄຸນນະພາບ/ສິ່ງຈູງໃຈຄູ | ກົມຈັດຕັ້ງແລະພະນັກງານ, ກົມສ້າງຄູ, ມະຫາວິທະຍາໄລ, ສູນການສຶກສາຮຽນຮ່ວມ, ອົງການປົກຄອງທ້ອງຖິ່ນ, ໂຮງຮຽນ ແລະ ຊຸມຊົນ, ພະແນກສຶກສາທິການ ແລະກິລາແຂວງ, ຫ້ອງການສຶກສາທິການ ແລະກິລາເມືອງ, ວິທະຍາໄລຄູ, ກົມກິດຈະການນັກສຶກສາ, ກະຊວງພາຍໃນ | 1, 869 | 431 | 2, 300 |
| 42. ປັບປຸງຂະບວນການແນະນຳ, ເສີມສ້າງທັກສະ ແລະ ທັດສະນະຄະຕິກ່ຽວກັບ ການສຶກສາຮຽນຮ່ວມໃຫ້ແກ່ຄູໃໝ່. | 2011-2015 | 2.2 ຄຸນນະພາບ/ສ້າງຄູ | ກົມຈັດຕັ້ງແລະພະນັກງານ, ກົມສ້າງຄູ, ສູນການສຶກສາຮຽນຮ່ວມ, ພະແນກສຶກສາທິການ ແລະກິລາແຂວງ, ຫ້ອງການສຶກສາທິການ ແລະກິລາເມືອງ | 203 | 47 | 250 |
| 43. ສ້າງຄູ່ມືແນະນຳ, ຍຸດທະສາດການສ້າງ ແລະ ບັນຈຸ-ສັບຊ້ອນຄູເຄື່ອນທີ່ ເພື່ອຈັດຕັ້ງການຮຽນ-ການສອນໃນເຂດຊົນນະບົດຫ່າງໄກສອກຫຼີກ ທີ່ບໍ່ມີເງື່ອນໄຂ ສ້າງຕັ້ງໂຮງຮຽນ. | 2011-2015 | 1.2 ຂະຫຍາຍໂອກາດ/ຫຼຸດຜ່ອນການຄ້າງຫ້ອງ-ປະລະ<br>2.2 ຄຸນນະພາບ/ສ້າງຄູ<br>2.3 ຄຸນນະພາບ/ບັນຈຸຄູ<br>2.4 ຄຸນນະພາບ/ສິ່ງຈູງໃຈຄູ | ກົມຈັດຕັ້ງແລະພະນັກງານ, ກົມສ້າງຄູ, ສູນການສຶກສາຮຽນຮ່ວມ, ກະຊວງພາຍໃນ, ແນກສຶກສາທິການ ແລະກິລາແຂວງ | 2, 063 | 476 | 2, 539 |
| 44. ສ້າງຄວາມເຂັ້ມແຂງ ແລະ ສະໜອງງົບປະມານຢ່າງພຽງພໍ ໃຫ້ແກ່ກຸ່ມໂຮງຮຽນ ແລະ ຄູສຶກສານິເທດ ເພື່ອ ສົ່ງເສີມການຮຽນຮ່ວມ, ປັບປຸງການຮ່ວມມື, ຍົກລະດັບຄຸນນະພາບ ຂອງໂຮງຮຽນທັງໝົດ ເພື່ອຫຼຸດຜ່ອນ ຄວາມຫຼຸດໂຕນລະຫວ່າງໂຮງຮຽນຕ່າງໆ. | 2011-2015 | 3.2 ບໍລິຫານຄຸ້ມຄອງ/ເມືອງ-ໂຮງຮຽນ | ກົມການເງິນ, ກົມອະນຸບານ ແລະ ປະຖົມ ສຶກສາ, ພະແນກສຶກສາທິການແລະກິລາແຂວງ, ຫ້ອງການສຶກສາທິການແລະກິລາເມືອງ, ອົງການປົກຄອງທ້ອງຖິ່ນ, ພະແນກສຶກສາທິການ ແລະກິລາແຂວງ, ຫ້ອງການສຶກສາທິການ ແລະກິລາເມືອງ | 19, 145 | 4, 420 | 23, 565 |

| ໜ້າວຽກຫຼັກ | ໄລຍະ ປະຕິບັດ | ແຜນງານ/ໂຄງການຂອງແຜນ ພັດທະນາຂະແໜງການສຶກສາ 2011-2015 ທີ່ກ່ຽວຂ້ອງ[2] | ພາກສ່ວນ ຮັບຜິດຊອບ | ຄາດຄະເນງົບປະມານ (ລ້ານກີບ) | | |
|---|---|---|---|---|---|---|
| | | | | ຈາກລັດຖະບານ | ຈາກແຫຼ່ງອື່ນ | ລວມ |
| 45. ຮັບປະກັນໃຫ້ຄູເຝິກໃນສະຖາບັນສ້າງຄູ ມີປະສົບການຕົວຈິງ ແລະ ມີຄວາມເຂົ້າໃຈ ຢ່າງເລິກເຊິ່ງກ່ຽວກັບການຄຸ້ມຄອງ ແລະ ສິດສອນຫ້ອງຮຽນທີ່ມີຄວາມແຕກຕ່າງຫຼາກຫຼາຍ ເພື່ອສາມາດໃຫ້ການຊ່ວຍເຫຼືອແກ່ນັກຮຽນຄູ ໃນການປະຕິບັດບັນດາຫຼັກການ ການຮຽນຮ່ວມຢ່າງແທ້ຈິງ. ໂດຍສະເພາະ ປະສົບການທາງດ້ານ ການສິດສອນນັກຮຽນພິການ ແລະ ການສິດສອນພາສາລາວເບື້ອງຕົ້ນ. | 2011-2015 | 2.2 ຄຸນນະພາບ/ສ້າງຄູ | ກົມສ້າງຄູ, ສູນການສຶກສາຮຽນຮ່ວມ, ກົມວິຊາການທີ່ກ່ຽວຂ້ອງ, ສະມາຄົມຄົນພິການ | 169 | 39 | 208 |
| 46. ສຶກສາ ແລະ ອົບຮົມ ບັນດານິຕິກຳ, ແຜນງານ ແລະວິຊາການດ້ານຕ່າງໆ ຢ່າງຕໍ່ເນື່ອງ ເພື່ອເສີມສ້າງທັດສະນະຄະຕິ, ຄ່ານິຍົມ ແລະ ທັກສະ ທີ່ຈຳເປັນກ່ຽວກັບ ການສຶກສາຮຽນຮ່ວມ ໃຫ້ແກ່ບຸກຄະລາກອນທີ່ມີໜ້າທີ່ສົ່ງເສີມ ແລະ ປະຕິບັດການສຶກສາຮຽນຮ່ວມ ທັງພາຍໃນ ແລະ ພາຍນອກຂະແໜງການສຶກສາແຕ່ຂັ້ນສູນກາງເຖິງທ້ອງຖິ່ນ. | 2011-2015 | 1.5 ຂະຫຍາຍໂອກາດ/ຮຽນຮ່ວມ | ກົມຈັດຕັ້ງແລະພະນັກງານ, ກົມວິຊາການທີ່ກ່ຽວຂ້ອງ, ສູນການສຶກສາຮຽນຮ່ວມ, ຂະແໜງການຕ່າງໆທີ່ກ່ຽວຂ້ອງ, ພະແນກສຶກສາທິການ ແລະກິລາແຂວງ, ຫ້ອງການສຶກສາ ທິການ ແລະກິລາເມືອງ, ອົງການ ປົກຄອງທ້ອງຖິ່ນທຸກ ລະດັບ | 211 | 49 | 260 |
| 47. ປັບປຸງລະບົບຄຸ້ມຄອງຂໍ້ມູນຂ່າວສານ ການສຶກສາ ເພື່ອ ສະໜອງຂໍ້ມູນການຮຽນຮ່ວມໃຫ້ດີຂຶ້ນ ໂດຍຮັບປະກັນ ໃຫ້ຂະບວນການເກັບກຳ ແລະ ວິເຄາະຂໍ້ມູນ ສາມາດລົງເລິກຂໍ້ມູນແຍກຕາມເພດ, ຊົນເຜົ່າ, ຄວາມພິການ, ຄວາມທຸກຍາກ ແລະອື່ນໆ. | 2012-2015 | 3.3 ບໍລິຫານຄຸ້ມຄອງ/ລະບົບຂໍ້ມູນ | ສູນສະຖິຕິແລະເທັກໂນໂລຊີ ຂ່າວສານການສຶກສາ, ສູນການສຶກສາຮຽນຮ່ວມ, ກົມສະຖິຕິ/ກະຊວງແຜນການແລະການລົງທຶນ, ສຶກສາທິການ ແລະກິລາແຂວງ, ຫ້ອງການສຶກສາທິການແລະກິລາເມືອງ, ໂຮງຮຽນ, ສະຖານທີ່ການສຶກສາ. | 2,140 | 494 | 2, 634 |

| ໜ້າວຽກຫຼັກ | ໄລຍະ ປະຕິບັດ | ແຜນງານ/ໂຄງການຂອງແຜນ ພັດທະນາຂະແໜງການສຶກສາ 2011-2015 ທີ່ກ່ຽວຂ້ອງ[2] | ພາກສ່ວນ ຮັບຜິດຊອບ | ຄາດຄະເນງົບປະມານ (ລ້ານກີບ) | | |
|---|---|---|---|---|---|---|
| | | | | ຈາກລັດຖະບານ | ຈາກແຫຼ່ງອື່ນ | ລວມ |
| 48. ສ້າງຄວາມສາມາດໃຫ້ແກ່ພະນັກງານທີ່ກ່ຽວຂ້ອງ ຂັ້ນຕ່າງໆ ທັງພາຍໃນ ແລະ ນອກຂະແໜງການ ສຶກສາ ໃນການເກັບກຳ ແລະ ວິເຄາະຂໍ້ມູນກ່ຽວກັບ ບັນດາປັດໄຈທີ່ກີດກັ້ນ ການເຂົ້າເຖິງການສຶກສາ ຂອງ ເພດຍິງ, ຊົນເຜົ່າ, ຄົນພິການ ແລະ ກຸ່ມດ້ອຍ ໂອກາດ ຕ່າງໆ ແລະ ສາມາດນຳໃຊ້ຂໍ້ມູນດັ່ງກ່າວ ເຂົ້າໃນການພັດທະນາການຮຽນຮ່ວມ ໃຫ້ມີ ປະສິດທິຜົນ. | 2012-2015 | 3.3 ບໍລິຫານຄຸ້ມຄອງ/ລະບົບຂໍ້ມູນ | ກົມຈັດຕັ້ງແລະພະນັກງານ, ສູນສະຖິຕິແລະເທັກໂນໂລຊີ ຂ່າວສານການສຶກສາ, ສູນການສຶກສາຮຽນຮ່ວມ, ສູນຄົ້ນຄ້ວາຍຸດທະສາດ ແລະ ວິໄຈການສຶກສາ, ຫ້ອງການກະຊວງສຶກສາທິການ ແລະ ກິລາ, ສະມາຄົມຄົນພິການ | 528 | 122 | 650 |
| **ຍຸດທະສາດ ທີ 8: ສົ່ງເສີມການມີສ່ວນຮ່ວມ ຂອງທຸກພາກສ່ວນໃນທຸກລະດັບ, ເປັນຕົ້ນ ຄະນະກຳມະການພັດທະນາ ການສຶກສາ, ອົງການຈັດຕັ້ງທາງສັງຄົມ, ຫົວໜ່ວຍທຸລະກິດ ທັງພາກລັດ ແລະ ເອກະຊົນ ໃນການ ປົກປ້ອງກຸ່ມດ້ອຍໂອກາດ ແລະ ຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມ.** | | | | | | |
| | | | **ລວມງົບປະມານ ສຳລັບ ຍຸດທະສາດ ທີ 8** | **4, 584** | **1, 058** | **5, 642** |
| 49. ປັບປຸງເຄືອຂ່າຍການສຶກສາຮຽນຮ່ວມ ທັງພາຍໃນ ແລະ ພາຍນອກຂະແໜງການສຶກສາ ແຕ່ຂັ້ນ ສູນກາງ ເຖິງທ້ອງຖິ່ນ ເພື່ອປະສານງານ ການຈັດຕັ້ງ ປະຕິບັດ, ຕິດຕາມ, ປະເມີນຜົນ ນະ ໂຍບາຍ, ຍຸດທະສາດ ແລະ ແຜນປະຕິບັດງານ ແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມ. | 2011-2015 | 1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>2.5 ຄຸນນະພາບ/ຜົນງານ ໂຮງຮຽນ-ນັກຮຽນ<br>3.1 ບໍລິຫານຄຸ້ມຄອງ/ສູນກາງ-ແຂວງ<br>3.2 ບໍລິຫານຄຸ້ມຄອງ/ເມືອງ-ໂຮງຮຽນ<br>3.3 ບໍລິຫານຄຸ້ມຄອງ/ລະບົບຂໍ້ມູນ<br>3.6 ບໍລິຫານຄຸ້ມຄອງ/ການຕິດຕາມ ທົ່ວຂະແໜງການ | ສູນການສຶກສາຮຽນຮ່ວມ, ຄະນະຄຸ້ມຄອງເຄືອຂ່າຍການສຶກສາຮຽນຮ່ວມ ແລະການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ສະມາຄົມຄົນພິການ | 253 | 59 | 312 |
| 50. ສ້າງຄວາມເຂັ້ມແຂງ, ຍົກສູງພາລະບົດບາດ ແລະ ສົ່ງເສີມການມີສ່ວນຮ່ວມ ຂອງບັນດາອົງການ ຈັດຕັ້ງ ທີ່ເປັນຕົວແທນໃຫ້ແກ່ຄົນພິການ, ເຊັ່ນ: ສະມາຄົມຄົນພິການ, ສະມາຄົມ ພໍ່ແມ່-ຜູ້ປົກຄອງ ຄົນພິການ ແລະ ອົງກອນຕ່າງໆ ໃນການສ້າງ ລະບົບການສຶກສາ, ຫຼັກສູດ ແລະ ການບໍລິການ ຕ່າງໆ ສຳລັບຄົນພິການ. | 2011-2015 | 1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>2.1 ຄຸນນະພາບ/ຫຼັກສູດ<br>3.1 ບໍລິຫານຄຸ້ມຄອງ/ສູນກາງ-ແຂວງ | ສູນການສຶກສາຮຽນຮ່ວມ, ສະຖາບັນຄົ້ນຄວ້າວິທະຍາສາດ ການສຶກສາ, ກົມສ້າງຄູ, ຄະນະ ກຳມະການ ແຫ່ງຊາດ ເພື່ອຄົນພິການ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສາທາລະນະສຸກ, ພະແນກສຶກສາ ທິການ ແລະກິລາແຂວງ, ຫ້ອງການສຶກສາ ທິການ ແລະກິລາເມືອງ | 106 | 24 | 130 |

| **ໜ້າວຽກຫຼັກ** | **ໄລຍະ ປະຕິບັດ** | **ແຜນງານ/ໂຄງການຂອງແຜນ ພັດທະນາຂະແໜງການສຶກສາ 2011-2015 ທີ່ກ່ຽວຂ້ອງ[2]** | **ພາກສ່ວນ ຮັບຜິດຊອບ** | **ຄາດຄະເນງົບປະມານ (ລ້ານກີບ)** | | |
|---|---|---|---|---|---|---|
| | | | | **ຈາກລັດຖະບານ** | **ຈາກແຫຼ່ງອື່ນ** | **ລວມ** |
| 51. ເສີມຂະຫຍາຍການຮ່ວມມືລະຫວ່າງໂຮງຮຽນ ກັບ ຊຸມຊົນ, ຄະນະພັດທະນາການສຶກສາຂັ້ນບ້ານ, ອົງການປົກຄອງທ້ອງຖິ່ນ ໃນການປຸກລະດົມຜູ້ປົກຄອງ ໃຫ້ສົ່ງເດັກ ທີ່ຍັງບໍ່ໄດ້ເຂົ້າຮຽນໃຫ້ມາຮຽນ, ຊ່ວຍເຫຼືອໃຫ້ເຂົາເຈົ້າຮຽນຈົບຈົບການສຶກສາຂັ້ນພື້ນຖານ ແລະ ສືບຕໍ່ຮຽນວິຊາຊີບ ແລະ ການສຶກສາໃນລະດັບສູງຂຶ້ນ. | 2011-2015 | 1.3 ຂະຫຍາຍໂອກາດ/ການມີສ່ວນຮ່ວມຂອງເອກະຊົນ-ຊຸມຊົນ<br>1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>3.2 ບໍລິຫານຄຸ້ມຄອງ/ເມືອງ-ໂຮງຮຽນ | ກົມອະນຸບານ ແລະ ປະຖົມ ສຶກສາ, ກົມມັດທະຍົມສຶກສາ, ກົມອາຊີວະສຶກສາ, ກົມການສຶກສາຊັ້ນສູງ, ສູນການສຶກສາຮຽນຮ່ວມ, ກົມສ້າງຄູ, ພະແນກສຶກສາທິການ ແລະກິລາແຂວງ, ຫ້ອງການສຶກສາທິການ ແລະກິລາເມືອງ | 4,062 | 938 | 5, 000 |
| 52. ສະໜັບສະໜູນໃຫ້ອົງການປົກຄອງທ້ອງຖິ່ນ, ຜູ້ນຳຊຸມຊົນ ແລະ ພໍ່ແມ່-ຜູ້ປົກຄອງ ໃຫ້ເຂົ້າມາມີສ່ວນຮ່ວມຢ່າງຫ້າວຫັນເພື່ອຊ່ວຍເຫຼືອໂຮງຮຽນແລະຄູໃນການອອກແບບ ແລະ ປະຕິບັດເນື້ອໃນຫຼັກສູດທ້ອງຖິ່ນໃຫ້ແທດເໝາະກັບສະພາບ ແລະ ຄວາມຕ້ອງການຕົວຈິງຂອງຜູ້ຮຽນ ແລະ ຊຸມຊົນໃນທ້ອງຖິ່ນ. | 2011-2015 | 1.3 ຂະຫຍາຍໂອກາດ/ການມີສ່ວນຮ່ວມຂອງເອກະຊົນ-ຊຸມຊົນ<br>1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>2.1 ຄຸນນະພາບ/ຫຼັກສູດ<br>3.2 ບໍລິຫານຄຸ້ມຄອງ/ເມືອງ-ໂຮງຮຽນ | ກົມອະນຸບານ ແລະ ປະຖົມ ສຶກສາ, ກົມມັດທະຍົມສຶກສາ, ກົມການສຶກສາ ນອກໂຮງຮຽນ, ກົມພະລະ ແລະ ສິລະປະສຶກສາ, ກົມສ້າງຄູ, ສູນການສຶກສາຮຽນຮ່ວມ, ກົມສ້າງຄູ, ພະແນກສຶກສາທິການ ແລະກິລາແຂວງ, ຫ້ອງການ ສຶກສາທິການ ແລະກິລາເມືອງ | | | |
| 53. ເຜີຍແຜ່ຜົນສຳເລັດຂອງການສິດສອນ ແລະ ໃຫ້ການຊ່ວຍເຫຼືອ; ໃຫ້ການຍ້ອງຍໍຊົມເຊີຍຢ່າງເປັນທາງການ ຕໍ່ຜູ້ທີ່ມີຜົນງານດີເດັ່ນ ໃນການສົ່ງເສີມການສຶກສາຮຽນຮ່ວມ. | 2012-2015 | 1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>2.5 ຄຸນນະພາບ/ຜົນງານ ໂຮງຮຽນ-ນັກຮຽນ | ກົມຈັດຕັ້ງແລະພະນັກງານສູນການສຶກສາຮຽນຮ່ວມ, ກົມວິຊາການທີ່ກ່ຽວຂ້ອງ, ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ, ກະຊວງຖະແລງຂ່າວແລະວັດທະນະທຳ, ພະແນກສຶກສາທິການແຂວງ, ຫ້ອງການສຶກສາທິການແເລະກິລາມືອງ, ອົງການປົກຄອງທ້ອງຖິ່ນ | 162 | 38 | 200 |
| **ຍຸດທະສາດ ທີ 9: ເພີ່ມການລົງທຶນໃສ່ການສຶກສາເວົ້າລວມ, ເວົ້າສະເພາະ ການສຶກສາຮຽນຮ່ວມ ໃຫ້ເພີ່ມຂຶ້ນຕາມລຳດັບ. ລະດົມການຊ່ວຍເຫຼືອ ແລະ ຂົນຂວາຍທຶນຮອນທີ່ຈຳເປັນ ຈາກຊຸມຊົນ, ອົງການຈັດຕັ້ງສາກົນ, ພາກສ່ວນ ເອກະຊົນ, ມູນນິທິ, ກອງທຶນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ຂົງເຂດນີ້ ນັບມື້ ນັບຫຼາຍຂຶ້ນ.** | | | | | | |
| | | | **ລວມງົບປະມານ ສຳລັບ ຍຸດທະສາດ ທີ 9** | **244** | **56** | **300** |

| ໜ້າວຽກຫຼັກ | ໄລຍະ ປະຕິບັດ | ແຜນງານ/ໂຄງການຂອງແຜນ ພັດທະນາຂະແໜງການສຶກສາ 2011-2015 ທີ່ກ່ຽວຂ້ອງ[2] | ພາກສ່ວນ ຮັບຜິດຊອບ | ຄາດຄະເນງົບປະມານ (ລ້ານກີບ) | | |
|---|---|---|---|---|---|---|
| | | | | ຈາກລັດຖະບານ | ຈາກແຫຼ່ງອື່ນ | ລວມ |
| 54. ຮັບປະກັນການຈັດສັນງົບປະມານລັດໃຫ້ແກ່ຂະແໜງການສຶກສາ ໃຫ້ບັນລຸ 18% ຂອງງົບປະມານແຫ່ງຊາດ ຕາມທີ່ກໍານົດໄວ້ໃນກົດໝາຍການສຶກສາ , ແນໃສ່ຮັບປະກັນການສະໜອງງົບປະມານ ເພື່ອສົ່ງເສີມການສຶກສາຮຽນຮ່ວມຢ່າງແທ້ຈິງ. | 2011-2015 | 1.5 ຂະຫຍາຍໂອກາດ/ຮຽນຮ່ວມ<br>3.5 ບໍລິຫານຄຸ້ມຄອງ/ການເງິນສໍາລັບຜູ້ທຸກຍາກ | ກະຊວງສຶກສາ, ກະຊວງການເງິນ, ກະຊວງແຜນການແລະການລົງທຶນ, ສະພາແຫ່ງຊາດ, ສຶກສາທິການ ແຂວງ, ອົງການປົກຄອງທ້ອງຖິ່ນ | 244 | 56 | 300 |
| 55. ຊຸກຍູ້ ແລະ ສົ່ງເສີມພາກເອກະຊົນ ແລະ ອົງກອນທີ່ບໍ່ຂຶ້ນກັບລັດຖະບານ ໃຫ້ມີບົດບາດ ແລະ ສ່ວນຮ່ວມ ໃນການສະໜອງການສຶກສາທີ່ມີຄຸນນະພາບ, ໂດຍສະເພາະ ຜູ້ດ້ອຍໂອກາດການສຶກສາ. | 2011-2015 | 1.3 ຂະຫຍາຍໂອກາດ/ການມີສ່ວນຮ່ວມຂອງ ເອກະຊົນ-ຊຸມຊົນ | ກະຊວງສຶກສາທິການ, ກະຊວງການຕ່າງປະເທດ, ກະຊວງແຜນການແລະການລົງທຶນ, ກະຊວງພາຍໃນ, ການ ປົກຄອງ ແລະ ຄຸ້ມຄອງລັດຖະກອນ, ສະມາຄົມຄົນພິການ | | | |

# VII. ສັງລວມຄວາມຕ້ອງການທາງດ້ານງົບປະມານ ແລະ ແຫຼ່ງທຶນ

ອີງຕາມລາຍລະອຽດທີ່ໄດ້ນຳສະເໜີໃນພາກທີ VI ຂ້າງເທິງ, **ຄວາມຕ້ອງການທາງດ້ານງົບປະມານ** ເພື່ອຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນປະຕິບັດງານການສຶກສາຮຽນຮ່ວມ 2011-2015 ສາມາດສະຫຼຸບສັງລວມໄດ້ດັ່ງນີ້:

| | ຈາກລັດຖະບານ | ຈາກແຫຼ່ງອື່ນ | ລວມ (ລ້ານກີບ) |
|---|---|---|---|
| **ຂອບເຂດຍຸດທະສາດ ທີ 1** | 1, 884, 338 | 434, 995 | 2, 319, 333 |
| **ຂອບເຂດຍຸດທະສາດ ທີ 2** | 1, 213, 393 | 280, 109 | 1, 493, 502 |
| **ຂອບເຂດຍຸດທະສາດ ທີ 3** | 1, 320, 833 | 304, 911 | 1, 625, 745 |
| **ຂອບເຂດຍຸດທະສາດ ທີ 4** | 4, 057 | 937 | 4, 994 |
| **ຂອບເຂດຍຸດທະສາດ ທີ 5** | 1, 108, 905 | 255, 988 | 1, 364, 893 |
| **ຂອບເຂດຍຸດທະສາດ ທີ 6** | 111, 929 | 25, 838 | 137, 767 |
| **ຂອບເຂດຍຸດທະສາດ ທີ 7** | 26, 328 | 6, 078 | 32, 406 |
| **ຂອບເຂດຍຸດທະສາດ ທີ 8** | 4, 584 | 1, 058 | 5, 642 |
| **ຂອບເຂດຍຸດທະສາດ ທີ 9** | 244 | 56 | 300 |
| **ລວມ** | **5, 674, 611** | **1, 309, 970** | **6, 984, 582** |

ງົບປະມານສຳລັບຈັດຕັ້ງປະຕິບັດ ຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດ ວ່າດ້ວຍການສຶກສາຮຽນຮ່ວມຂ້າງເທິງ ແມ່ນສ່ວນໜຶ່ງຂອງງົບປະມານທີ່ໄດ້ນຳສະເໜີໃນແຜນພັດທະນາຂະແໜງການສຶກສາ 2011-2015, ດັ່ງນັ້ນ ຈຶ່ງມີແຫຼ່ງທຶນດຽວກັນ, ເປັນຕົ້ນ:

1) ການຈັດສັນງົບປະມານຂອງລັດໃຫ້ກະຊວງສຶກສາທິການແລະກິລາ ແລະ ບັນດາກົມທີ່ກ່ຽວຂ້ອງ
2) ການຈັດສັນງົບປະມານຂອງແຂວງໃຫ້ຫ້ອງການສຶກສາທິການ ແລະກິລາປະຈຳແຂວງ
3) ການຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກຄູ່ຮ່ວມພັດທະນາ
4) ຊັບພະຍາກອນຈາກອົງການຈັດຕັ້ງສາກົນ ຮວມທັງອົງການທີ່ບໍ່ຂຶ້ນກັບລັດຖະບານ
5) ການຈັດສັນງົບປະມານພິເສດຈາກບໍລິສັດໄຟຟ້ານ້ຳເທີນ 2.

# VIII. ການຈັດຕັ້ງປະຕິບັດ

1. **ທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ພາຍນອກ ຂະແໜງການສຶກສາ**
   - ຮັບປະກັນວ່າ ເນື້ອໃນຂອງຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມສະບັບນີ້ ໄດ້ຮັບການຜັນຂະຫຍາຍ ແລະ ເຊື່ອມເຂົ້າໃນ ແຜນປະຕິບັດງານຂອງຕົນ **ຕາມພາລະບົດບາດ ແລະ ການແບ່ງປັນໜ້າທີ່ ໃນພາກທີ** VI ຂອງເອກະສານສະບັບນີ້.

2. **ຄະນະຄຸ້ມຄອງເຄືອຂ່າຍການສຶກສາຮຽນຮ່ວມ ແລະ ການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ**:
   - ປະສານງານກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຕິດຕາມ, ປະເມີນ ແລະ ລາຍງານຜົນການປະຕິບັດ ຍຸດທະສາດແລະແຜນປະຕິບັດງານແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມໃຫ້ແກ່ລັດຖະມົນຕີວ່າການ ກະຊວງສຶກສາທິການ ແລະກິລາ ຢ່າງເປັນປົກກະຕິ.

3. **ກະຊວງສຶກສາທິການ ແລະ ກິລາ**
   - ເປັນເຈົ້າການສົມທົບກັບບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ພະແນກສຶກສາທິການແລະກິລາ ປະຈຳແຂວງ/ນະຄອນຫຼວງ, ຫ້ອງການສຶກສາທິການແລະກິລາປະຈຳເມືອງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນປະຕິບັດງານການສຶກສາຮຽນຮ່ວມ.

   - ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານການສຶກສາຮຽນຮ່ວມ ໃຫ້ແກ່ລັດຖະບານ ແລະ ສະພາແຫ່ງຊາດ ຢ່າງເປັນປົກກະຕິໂດຍຜ່ານຄະນະກຳມາທິການແຫ່ງຊາດ ກ່ຽວກັບ ການປະຕິຮູບລະບົບການສຶກສາ.

4. **ຄະນະກຳມາທິການແຫ່ງຊາດ ກ່ຽວກັບ ການປະຕິຮູບລະບົບການສຶກສາ.**

   - ຊີ້ນຳ, ຊຸກຍູ້ ແລະ ຕິດຕາມ ການຜັນຂະຫຍາຍນະໂຍບາຍ, ຍຸດທະສາດແລະແຜນປະຕິບັດງານແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມ ຂອງບັນດາກະຊວງ, ຄະນະກຳມະການ ທຽບເທົ່າ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

## ເອກະສານຊ້ອນທ້າຍ 1: ບັນດາແຜນງານ ແລະ ໂຄງການບູລິມະສິດຂອງແຜນພັດທະນາ ຂະແໜງການສຶກສາ 2011-2015

### <u>ແຜນງານທີ 1: ຂະຫຍາຍໂອກາດການເຂົ້າຮຽນຢ່າງທົ່ວເຖິງ</u>

ໂຄງການທີ 1: ຫຼຸດຜ່ອນຄ່າໃຊ້ຈ່າຍຕ່າງໆທີ່ເປັນອຸປະສັກຕໍ່ການສຶກສາ
ໂຄງການທີ 2: ຫຼຸດຜ່ອນການຄ້າງຫ້ອງ ແລະ ການປະລະການຮຽນ
ໂຄງການທີ 3: ເພີ່ມທະວີການມີສ່ວນຮ່ວມຂອງພາກເອກະຊົນ ແລະ ຊຸມຊົນເຂົ້າໃນການສຶກສາ
ໂຄງການທີ 4: ການນຳໃຊ້ທຶນໃຫ້ຖືກຕ້ອງຕາມເປົ້າໝາຍ
ໂຄງການທີ 5: ການອຳນວຍຄວາມສະດວກຂອງການເຂົ້າຮຽນ, ການເລື່ອນຊັ້ນ ແລະ ການຮຽນຈົບຊັ້ນ ຂອງເດັກ ທີ່ດ້ອຍໂອກາດໂດຍວິທີການຮຽນຮ່ວມ
ໂຄງການທີ 6: ອຳນວຍຄວາມສະດວກໃຫ້ແກ່ການສຶກສາກ່ອນໄວຮຽນ
ໂຄງການທີ 7: ເພີ່ມການເຂົ້າຮຽນໃນໂຮງຮຽນມັດທະຍົມຕອນປາຍ, ໂຮງຮຽນສາມັນວິຊາຊີບ, ວິທະຍາໄລເຕັກນິກ ແລະ ສະຖາບັນການສຶກສາຊັ້ນສູງ

### <u>ແຜນງານທີ 2: ປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ</u>

ໂຄງການທີ 1: ການປະຕິຮູບຫຼັກສູດ ແລະ ການສະໜອງອຸປະກອນການຮຽນ-ການສອນ
ໂຄງການທີ 2: ການກໍ່ສ້າງ-ບຳລຸງຍົກລະດັບຄູ ແລະ ການພັດທະນາບຸກຄະລາກອນ
ໂຄງການທີ 3: ບັນຈຸ ແລະ ສັບຊ້ອນຄູໃຫ້ທົ່ວເຖິງ
ໂຄງການທີ 4: ການປະຕິບັດໜ້າທີ່, ການຄິດໄລ່ຄ່າຕອບແທນ ແລະ ສິ່ງຈູງໃຈອື່ນໆສຳລັບຄູ
ໂຄງການທີ 5: ປັບປຸງວຽກງານການຕິດຕາມຜົນງານຂອງໂຮງຮຽນ ແລະ ຜົນການຮຽນຂອງນັກຮຽນ

### <u>ແຜນງານທີ 3: ປັບປຸງວຽກງານບໍລິຫານ ແລະ ຄຸ້ມຄອງການສຶກສາ</u>

ໂຄງການທີ 1: ສ້າງຄວາມເຂັ້ມແຂງ ໃຫ້ແກ່ລະບົບການຕິດຕາມ ແລະ ການວາງແຜນຂອງ ຂັ້ນສູນກາງ ແລະ ຂັ້ນແຂວງ
ໂຄງການທີ 2: ຍົກສູງປະສິດທິພາບລະບົບການຄຸ້ມຄອງຂັ້ນເມືອງ ແລະ ໂຮງຮຽນ
ໂຄງການທີ 3: ສ້າງຄວາມເຂັ້ມແຂງໃນການບໍລິຫານ ແລະ ຄຸ້ມຄອງລະບົບຂໍ້ມູນ
ໂຄງການທີ 4: ສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງການສຶກສາ ແລະ ຊັບພະຍາກອນ ມະນຸດ
ໂຄງການທີ 5: ຈັດຕັ້ງປະຕິບັດຍຸດທະສາດການເງິນການສຶກສາສຳລັບຜູ້ທຸກຍາກ
ໂຄງການທີ 6: ຍຸດທະສາດທາງດ້ານການປະຕິບັດເພື່ອປັບປຸງຜົນການຕິດຕາມທົ່ວຂະແໜງການ
ໂຄງການທີ 7: ເພີ່ມທະວີຄວາມສອດຄ່ອງຂອງລະບົບຕິດຕາມການປະຕິບັດງານ

## ເອກະສານຊ້ອນທ້າຍ 2: ນິຍາມຄໍາສັບທີ່ໃຊ້ໃນ ນະໂຍບາຍ, ຍຸດທະສາດ ແລະ ແຜນປະຕິບັດງານ ແຫ່ງຊາດ ວ່າດ້ວຍການສຶກສາຮຽນຮ່ວມ

**"ການສຶກສາຮຽນຮ່ວມ"**[3] ໝາຍເຖິງຂະບວນການ ສະໜອງການສຶກສາທີ່ມີຄຸນນະພາບ ແລະ ມີການປັບປຸງຢ່າງຕໍ່ເນື່ອງ ໃຫ້ແທດເໝາະກັບຈຸດພິເສດ, ຄວາມສາມາດ ແລະ ຄວາມຕ້ອງການທີ່ຫຼາກຫຼາຍຂອງຜູ້ຮຽນທຸກຄົນ, ແນໃສ່ແກ້ໄຂ ບັນດາອຸປະສັກທີ່ກີດກັ້ນການເຂົ້າເຖິງການສຶກສາ ໂດຍສ້າງສະພາບ ແວດລ້ອມການຮຽນຮູ້ທີ່ເປັນມິດ, ປອດໄພ, ປາສະຈາກການຈໍາແນກ ແລະ ປົກປ້ອງຜູ້ຮຽນ. ພ້ອມທັງຊຸກຍູ້ ໃຫ້ຜູ້ຮຽນ, ຄອບຄົວ ແລະ ຊຸມຊົນ ໃຫ້ມີສ່ວນຮ່ວມໃນການຮຽນຮູ້ດັ່ງກ່າວຢ່າງມີ ປະສິດທິຜົນ.

**"ປະຕິທິນການສຶກສາ"** ໝາຍເຖິງ ການກໍານົດຕາຕະລາງ ການເຄື່ອນໄຫວ ວຽກງານພາຍໃນສົກຮຽນ.

**"ສິດສະເໝີພາບຍິງ-ຊາຍ"**[4] ໝາຍເຖິງ ຄວາມເທົ່າທຽມກັນໃນການພັດທະນາຕົນເອງ; ຍິງ ແລະ ຊາຍ ມີຄຸນຄ່າ ແລະ ໂອກາດເທົ່າທຽມກັນທາງດ້ານການເມືອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ, ຄອບຄົວ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ ຕາມທີ່ໄດ້ກໍານົດໄວ້ໃນລັດຖະທໍາມະນູນ ແລະ ກົດໝາຍ.

**"ບົດບາດຍິງ-ຊາຍ"[5]** ໝາຍເຖິງ ການພົວພັນລະຫວ່າງ ຍິງ ແລະ ຊາຍ ທາງດ້ານສັງຄົມ ແລະ ວັດທະນະທໍາ. ຮູບການພົວພັນແມ່ນສັງຄົມ ແລະ ວັດທະນະທໍາ ເປັນຜູ້ສ້າງຂຶ້ນ ດ້ວຍການອົບຮົມສັ່ງສອນໂດຍກົງໃນຄອບຄົວ, ໂຮງຮຽນ, ສາດສະໜາ ແລະ ໄດ້ຮັບຜົນສະທ້ອນ ຈາກສະພາບແວດລ້ອມ. ບົດບາດ ຍິງ-ຊາຍ ແຕກຕ່າງກັນໄປຕາມແຕ່ລະບ່ອນ, ແຕ່ລະຊຸມຊົນ ແລະ ໄລຍະເວລາ.

**"ການຈໍາແນກຕໍ່ແມ່ຍິງ"**[6] ໝາຍເຖິງທຸກການແບ່ງແຍກ, ການກີດກັ້ນ ຫຼື ການຈໍາກັດແມ່ຍິງ ເນື່ອງຈາກເຫດຜົນທາງເພດ ຊຶ່ງເຮັດໃຫ້ແມ່ຍິງຂາດການຍອມຮັບຈາກສັງຄົມ ດ້ານການນໍາໃຊ້ສິດຂອງຕົນ, ດ້ານຄວາມສະເໝີພາບ ຍິງ-ຊາຍ, ສິດທິມະນຸດ, ເສລີພາບ ທາງດ້ານການເມືອງ, ເສດຖະກິດ, ວັດທະນະທໍາ, ສັງຄົມ ຫຼື ດ້ານອື່ນໆ.

**"ຊົນເຜົ່າ"**[7] ໝາຍເຖິງກຸ່ມຄົນທີ່ມີພາສາປາກເວົ້າຮ່ວມກັນ, ມີກົກເຄົ້າ ປະຫວັດສາດຄວາມເປັນມາ

---

3 ດັດປັບມາຈາກມະຕິກອງປະຊຸມສຶກສາສາກົນຄັ້ງທີ 48 ທີ່ນະຄອນເຈນີວາກ່ຽວກັບການສຶກສາຮຽນຮ່ວມ (2008)

4 ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ປີ 2006, ມາດຕາ 13

5 ບົດບາດ ຍິງ-ຊາຍ ໃນການພັດທະນາ, ສູນກາງສະຫະພັນແມ່ຍິງລາວ, 2000

6 ດໍາລັດຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ປີ 2006, ມາດຕາ 2

7 49 ຊົນເຜົ່າໃນວົງຄະນາຍາດແຫ່ງຊາດລາວ, ກໍາມາທິການບັນດາເຜົ່າ, ສະພາແຫ່ງຊາດແຫ່ງ ສ.ປ.ປ ລາວ, ກໍລະກົດ 2009

ຮ່ວມກັນ, ມີພື້ນຖານວັດທະນະທຳຮ່ວມກັນ ແລະ ເຊື່ອວ່າສືບເຊື້ອສາຍມາຈາກບັນພະບູລຸດດຽວກັນ.

**"ຄົນພິການ"**[8] ໝາຍເຖິງບຸກຄົນຜູ້ທີ່ມີຄວາມຜິດປົກກະຕິ ຫຼື ຄວາມບົກຜ່ອງທາງດ້ານຮ່າງກາຍ, ຈິດໃຈ, ມັນສະໝອງ, ສະຕິປັນຍາ, ການເຫັນ, ການໄດ້ຍິນ ແລະ ການປາກເວົ້າ ເປັນໄລຍະຍາວນານ ໂດຍບໍ່ຈຳແນກສາຍເຫດຂອງຄວາມເປັນພິການ ຊຶ່ງເປັນອຸປະສັກໃນການເຄື່ອນໄຫວ ກິດຈະກຳປະຈຳວັນ ແລະ ການເຂົ້າຮ່ວມຂອງເຂົາເຈົ້າໃນສັງຄົມຢ່າງເຕັມສ່ວນ ແລະ ມີປະສິດທິຜົນ ບົນພື້ນຖານຄວາມສະເໝີພາບ ກັບຄົນອື່ນໆ.

**"ເຄື່ອງຄໍ້າຊູ ແລະ ອຸປະກອນຊ່ວຍສ່ວນບຸກຄົນ"** ໝາຍເຖິງອຸປະກອນທຸກຢ່າງ ທີ່ຊ່ວຍໃຫ້ຄົນພິການສາມາດເຄື່ອນໄຫວກິດຈະກຳຕ່າງໆ ໃນຊີວິດປະຈຳວັນຂອງເຂົາເຈົ້າ ເຊັ່ນ: ລໍ້ເລື່ອນ, ລໍ້ຍົກ, ໄມ້ຄໍ້າເທົ້າ, ແວ່ນຕາ, ເຄື່ອງຊ່ວຍຟັງ, ແຂນຂາທຽມ ແລະ ອື່ນໆ.

**"ຜູ້ທີ່ມີຄວາມຫຍຸ້ງຍາກທາງດ້ານ ເສດຖະກິດ-ສັງຄົມ"**[9] ໝາຍເຖິງ ຜູ້ທີ່ມີຖານະ ທຸກຍາກ, ຂາດເງື່ອນໄຂອັນຈຳເປັນ ໃນການພັດທະນາຄວາມສາມາດ, ເດັກກຳພ້າ-ກຳພອຍ, ເດັກທີ່ຖືກປະຖິ້ມ, ຜູ້ທີ່ຖືກທາລຸນທາງເພດ, ຕົກເປັນເຫຍື່ອຂອງການຄ້າມະນຸດ, ຄວາມຮຸນແຮງ, ຖືກຂູດຮີດແຮງງານ, ຜູ້ອົບພະຍົບ, ແຮງງານເຄື່ອນຍ້າຍ, ຜູ້ທີ່ໄດ້ຮັບຜົນກະທົບຈາກໂລກເອດ ຫຼື ເຊື້ອເອັສໄອວີ, ຜູ້ທີ່ເຈັບປ່ວຍຕ້ອງປິ່ນປົວຍາວນານ, ຜູ້ຖືກຫາ, ຜູ້ກະທຳຜິດ, ຜູ້ທີ່ຖືກກັກຂັງ, ດັດສ້າງ, ບຳບັດ ແລະ ອື່ນໆ.

**"ຜູ້ທຸກຍາກ" ແລະ "ຄອບຄົວທຸກຍາກ"**[10] ໝາຍເຖິງ ບຸກຄົນ ຫຼື ຄອບຄົວ ທີ່ມີລາຍຮັບສະເລ່ຍ ຕໍ່າກ່ວາ 180.000 ກີບ ຕໍ່ເດືອນ (ສຳລັບເຂດຊົນນະບົດ) ຫຼື 240.000 ກີບ ຕໍ່ເດືອນ (ສຳລັບເຂດຕົວເມືອງ).

**"ສະຖານທີ່ການສຶກສາ"**[11] ແມ່ນບ່ອນດຳເນີນການຮຽນ-ການສອນທັງໃນໂຮງຮຽນ ແລະ ນອກໂຮງຮຽນ ເປັນຕົ້ນ ໂຮງຮຽນ, ສູນ ແລະ ສະຖາບັນການສຶກສາຕ່າງໆ.

**"ຜູ້ຮຽນ"**[12] ແມ່ນຜູ້ທີ່ກຳລັງສຶກສາຮ່ຳຮຽນຫຼືຄົ້ນຄ້ວາຢູ່ທຸກຊັ້ນ, ທຸກຂັ້ນໃນໂຮງຮຽນ ແລະ ນອກໂຮງຮຽນຂອງລະບົບການສຶກສາແຫ່ງຊາດ.

---

8 (ຮ່າງ) ດຳລັດວ່າດ້ວຍຄົນພິການ, ມາດຕາ 2

9 ກົດໝາຍ ວ່າດ້ວຍ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ, ມາດຕາ 2

10 ດຳລັດນາຍົກລັດຖະມົນຕີ ວ່າດ້ວຍມາດຕະຖານຄວາມທຸກຍາກ ແລະ ມາດຕະຖານພັດທະນາ 2010-2015 ເລກທີ 285/ນຍ, ລົງວັນທີ 13 ຕຸລາ 2009, ມາດຕາ 3 ແລະ 4

11 ກົດໝາຍວ່າດ້ວຍການສຶກສາ, 2007, ມາດຕາ 23

12 ກົດໝາຍວ່າດ້ວຍການສຶກສາ, 2007, ມາດຕາ 34